ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ 009 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 23 ມັງກອນ 2025

# ລັດຖະດຳລັດ

## ກ່ຽວກັບການປະກາດໃຊ້

## ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ (ສະບັບປັບປຸງ)

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 147/ສພຊ, ລົງວັນທີ 11 ທັນວາ 2024 ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ (ສະບັບປັບປຸງ);
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 05/ຄປຈ, ລົງວັນທີ 9 ມັງກອນ 2025.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

**ມາດຕາ 1** ປະກາດໃຊ້ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ (ສະບັບປັບປຸງ).

**ມາດຕາ 2** ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ປະທານປະເທດ

ທອງລຸນ ສີສຸລິດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 147 / ສພຊ
ນະຄອນຫຼວງວຽງຈັນ, ວັນທີ 11 / 12 / 24

# ມະຕິ
## ກອງປະຊຸມສະພາແຫ່ງຊາດ
## ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ
## (ສະບັບປັບປຸງ)

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 63/ສພຊ, ລົງວັນທີ 8 ທັນວາ 2015 ມາດຕາ 53 ຂໍ້ 1;
- ອີງຕາມກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020 ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 8 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ (ສະບັບປັບປຸງ) ໃນວາລະຕອນເຊົ້າຂອງກອງປະຊຸມ ຄັ້ງວັນທີ 5 ທັນວາ 2024 ແລະ ຖືກພິຈາລະນາຮັບຮອງເອົາໃນວາລະຕອນບ່າຍຂອງວັນທີ 11 ທັນວາ 2024.

**ກອງປະຊຸມສະພາແຫ່ງຊາດ ຕົກລົງ:**

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ (ສະບັບປັບປຸງ) ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສະມາຊິກສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປອ ໄຊສົມພອນ ພົມວິຫານ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ | ເລກທີ 68 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 11 ທັນວາ 2024

# ກົດໝາຍ
# ວ່າດ້ວຍອົງການໄອຍະການປະຊາຊົນ
# (ສະບັບປັບປຸງ)

## ພາກທີ I
## ບົດບັນຍັດທົ່ວໄປ

### ມາດຕາ 1 (ປັບປຸງ) ຈຸດປະສົງ

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຈັດຕັ້ງ, ການເຄື່ອນໄຫວ ຂອງອົງການໄອຍະການປະຊາຊົນ ເພື່ອເຮັດໃຫ້ການປະຕິບັດໜ້າທີ່ຂອງອົງການດັ່ງກ່າວ ມີປະສິດທິພາບ ແລະ ປະສິດທິຜົນ ແນໃສ່ ປົກປ້ອງ ຜົນປະໂຫຍດຂອງລັດ, ສັງຄົມ ແລະ ລວມໝູ່, ສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ, ຮັບປະກັນ ການສັ່ງຟ້ອງຜູ້ຖືກຫາຂຶ້ນສານຕາມກົດໝາຍ ແລະ ການຕິດຕາມກວດກາການເຄົາລົບ ແລະ ປະຕິບັດກົດໝາຍ ໃນການດຳເນີນຄະດີຕາມຂະບວນຍຸຕິທຳ, ເຮັດໃຫ້ສັງຄົມມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍ, ເພີ່ມທະວີນິຕິທຳ, ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ສ້າງສາປະເທດຊາດ.

### ມາດຕາ 2 (ປັບປຸງ) ອົງການໄອຍະການປະຊາຊົນ

ອົງການໄອຍະການປະຊາຊົນ ແມ່ນ ອົງການ ສັ່ງຟ້ອງຜູ້ຖືກຫາຂຶ້ນສານ ແລະ ຕິດຕາມກວດກາການເຄົາລົບ ແລະ ປະຕິບັດກົດໝາຍ ໃນການດຳເນີນຄະດີຕາມຂະບວນຍຸຕິທຳ.

### ມາດຕາ 3 (ປັບປຸງ) ການອະທິບາຍຄຳສັບ

ຄຳສັບ ທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ພະນັກງານ-ລັດຖະກອນ ອົງການໄອຍະການປະຊາຊົນ** ໝາຍເຖິງ ຫົວໜ້າ, ຮອງຫົວໜ້າອົງການໄອຍະການປະຊາຊົນ, ພະນັກງານໄອຍະການປະຊາຊົນ, ຜູ້ຊ່ວຍພະນັກງານໄອຍະການປະຊາຊົນ, ພະນັກງານວິຊາການກົດໝາຍ, ພະນັກງານບໍລິຫານ ແລະ ພະນັກງານອົງການໄອຍະການທະຫານ;
2. **ພະນັກງານໄອຍະການປະຊາຊົນ** ໝາຍເຖິງ ພະນັກງານ ທີ່ໄດ້ຮັບການແຕ່ງຕັ້ງ ໂດຍຫົວໜ້າອົງການໄອຍະການປະຊາຊົນສູງສຸດ ໃຫ້ປະຕິບັດໜ້າທີ່ ຕິດຕາມກວດກາ, ສອບສວນ ແລະ ເຂົ້າຮ່ວມປະຊຸມສານຕາມກົດໝາຍ;

3. **ຜູ້ຊ່ວຍພະນັກງານໄອຍະການປະຊາຊົນ** ໝາຍເຖິງ ພະນັກງານ ທີ່ໄດ້ຮັບການແຕ່ງຕັ້ງ ໂດຍຫົວໜ້າອົງການໄອຍະການປະຊາຊົນສູງສຸດ ໃຫ້ປະຕິບັດໜ້າທີ່ຊ່ວຍພະນັກງານໄອຍະການປະຊາຊົນ;

4. **ພະນັກງານອົງການໄອຍະການທະຫານ** ໝາຍເຖິງ ຫົວໜ້າ, ຮອງຫົວໜ້າ ອົງການໄອຍະການທະຫານ, ພະນັກງານໄອຍະການທະຫານ, ຜູ້ຊ່ວຍພະນັກງານໄອຍະການທະຫານ, ພະນັກງານວິຊາການກົດໝາຍ ແລະ ພະນັກງານບໍລິຫານ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍອົງການໄອຍະການທະຫານ;

5. **ນິຕິທຳ** ໝາຍເຖິງ ການເຄົາລົບ ແລະ ປະຕິບັດກົດໝາຍ ຢ່າງຖືກຕ້ອງ ແລະ ເຂັ້ມງວດ;

6. **ຄຳຕົກລົງ** ໝາຍເຖິງ ຄຳສັ່ງ, ຄຳແນະນຳ, ຄຳຖະແຫຼງ, ຄຳສະເໜີຄັດຄ້ານ, ຄຳສະເໜີຮື້ຟື້ນຄະດີ ແລະ ນິຕິກຳອື່ນ ຂອງອົງການໄອຍະການປະຊາຊົນ;

7. **ຄຳສັ່ງຟ້ອງ** ໝາຍເຖິງ ຄຳສັ່ງ ຂອງຫົວໜ້າອົງການໄອຍະການປະຊາຊົນ ທີ່ຕັ້ງຂໍ້ກ່າວຫາໃສ່ຜູ້ຖືກຫາ ເພື່ອໃຫ້ສານພິຈາລະນາຕັດສິນ;

8. **ຄຳຖະແຫຼງ** ໝາຍເຖິງ ຄຳເຫັນ ຂອງພະນັກງານໄອຍະການປະຊາຊົນ ທີ່ໃຈ້ແຍກການກະທຳຜິດຂອງຈຳເລີຍ ໃນທີ່ປະຊຸມສານ;

9. **ສະຖານທີ່ກັກຕົວ** ໝາຍເຖິງ ບ່ອນຄວບຄຸມຕົວຜູ້ຖືກສົງໄສ ພາຍໃນເວລາ ຕາມທີ່ກົດໝາຍໄດ້ກຳນົດໄວ້;

10. **ສະຖານທີ່ກັກຂັງ** ໝາຍເຖິງ ບ່ອນຄຸມຂັງຜູ້ຖືກຫາ ຫຼື ຈຳເລີຍ ໃນໄລຍະດຳເນີນຄະດີກ່ອນຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ;

11. **ຄ້າຍດັດສ້າງ** ໝາຍເຖິງ ສະຖານທີ່ສຶກສາອົບຮົມ, ດັດສ້າງທາງດ້ານບໍລິຫານ;

12. **ຄ້າຍຄຸມຂັງ** ໝາຍເຖິງ ສະຖານທີ່ປະຕິບັດໂທດ ຂອງນັກໂທດ ຕາມຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ.

**ມາດຕາ 4 (ປັບປຸງ) ນະໂຍບາຍຂອງລັດກ່ຽວກັບວຽກງານຂອງອົງການໄອຍະການປະຊາຊົນ**

ລັດ ສົ່ງເສີມ, ສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກໃນດ້ານຕ່າງໆ ໃຫ້ແກ່ການເຄື່ອນໄຫວປະຕິບັດໜ້າທີ່ ຂອງອົງການໄອຍະການປະຊາຊົນ ດ້ວຍການວາງນະໂຍບາຍ, ກົດໝາຍ, ລະບຽບການ, ປະກອບ, ບຳລຸງ ສ້າງບຸກຄະລາກອນ, ສະໜອງ ງົບປະມານ, ພາຫະນະ ແລະ ວັດຖຸປະກອນ ຮັບໃຊ້ທີ່ຈຳເປັນ ເພື່ອເຮັດໃຫ້ການສັ່ງຟ້ອງຜູ້ຖືກຫາຂຶ້ນສານ ແລະ ຕິດຕາມກວດກາການເຄົາລົບ ແລະ ປະຕິບັດກົດໝາຍ ໃນການດຳເນີນຄະດີຕາມຂະບວນຍຸຕິທຳ ໃຫ້ມີຄວາມໂປ່ງໃສ, ພາວະວິໄສ, ຍຸຕິທຳ ແລະ ຖືກຕ້ອງຕາມກົດໝາຍ.

ລັດ ສົ່ງເສີມ ແລະ ຊຸກຍູ້ການໂຄສະນາ, ສຶກສາອົບຮົມກົດໝາຍໃຫ້ສັງຄົມ ແລະ ປະຊາຊົນຮັບຮູ້, ເຂົ້າໃຈ ແລະ ປະຕິບັດໃຫ້ຖືກຕ້ອງ, ເຂັ້ມງວດ ເພື່ອຮັບປະກັນຄວາມໝັ້ນຄົງໃຫ້ແກ່ ລັດປະຊາທິປະໄຕປະຊາຊົນ ທີ່ປົກຄອງດ້ວຍກົດໝາຍ.

**ມາດຕາ 5 ຫຼັກການກ່ຽວກັບວຽກງານຂອງອົງການໄອຍະການປະຊາຊົນ**

ການເຄື່ອນໄຫວວຽກງານ ຂອງອົງການໄອຍະການປະຊາຊົນ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ຮັບປະກັນຄວາມສັກສິດຂອງກົດໝາຍ;
2. ຮັບປະກັນການຕິດຕາມກວດກາການປະຕິບັດກົດໝາຍຢ່າງຮອບດ້ານ, ຄົບຖ້ວນ ແລະ ພາວະວິໄສ;
3. ຮັບປະກັນຄວາມຊັດເຈນ, ຍຸຕິທຳ, ທັນເວລາ ແລະ ເປີດເຜີຍຕາມລະບຽບການ;
4. ຮັບປະກັນລະບອບລວມສູນເປັນເອກະພາບຕາມສາຍຕັ້ງ ແລະ ລະບອບຫົວໜ້າ;

5. ຮັບປະກັນໃຫ້ຜູ້ກະທຳຜິດໄດ້ຮັບການລົງໂທດຕາມກົດໝາຍ ແລະ ບໍ່ໃຫ້ຜູ້ບໍ່ໄດ້ກະທຳຜິດຖືກລົງໂທດ;

6. ຮັບປະກັນການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງໃນການປະຕິບັດວຽກງານ.

**ມາດຕາ 6 (ປັບປຸງ) ການພິຈາລະນາຄຳຮ້ອງຟ້ອງ ແລະ ຄຳສະເໜີ**

ຫົວໜ້າອົງການໄອຍະການປະຊາຊົນທຸກຂັ້ນ ພິຈາລະນາ ຄຳຮ້ອງຟ້ອງ, ຄຳສະເໜີ ຂອງອົງການຈັດຕັ້ງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ວິສາຫະກິດ ແລະ ພົນລະເມືອງ ຕາມເວລາທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 7 (ປັບປຸງ) ການປົກປ້ອງ**

ພະນັກງານ-ລັດຖະກອນ ອົງການໄອຍະການປະຊາຊົນ ລວມທັງຜູ້ເຂົ້າຮ່ວມໃນວຽກງານຕິດຕາມກວດກາ ເປັນຕົ້ນ ຜູ້ລາຍງານ, ຜູ້ໃຫ້ຂໍ້ມູນ ຂ່າວສານ, ພະຍານ, ຜູ້ຊ່ຽວຊານ ໄດ້ຮັບການປົກປ້ອງ ຕາມກົດໝາຍ ຈາກການບັງຄັບ, ນາບຂູ່ ແລະ ພຶດຕິກຳ ທີ່ເປັນອັນຕະລາຍ ຕໍ່ຊີວິດ, ສຸຂະພາບ, ກຽດສັກສີ ຫຼື ຊັບສິນ.

ກ່ອນຈະດຳເນີນຄະດີອາຍາ ຕໍ່ ພະນັກງານໄອຍະການປະຊາຊົນນັ້ນ ໃຫ້ລາຍງານຫົວໜ້າອົງການໄອຍະການປະຊາຊົນສູງສຸດ.

**ມາດຕາ 8 ການຮ່ວມມືສາກົນ**

ລັດ ສົ່ງເສີມ ການພົວພັນ ຮ່ວມມືກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຂອງອົງການໄອຍະການປະຊາຊົນ ເປັນຕົ້ນ ການຮ່ວມມືທາງດ້ານກົດໝາຍ ແລະ ຍຸຕິທຳ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນ ຂ່າວສານ, ເຕັກໂນໂລຊີ, ການຝຶກອົບຮົມ, ສຳມະນາ, ຍົກລະດັບຄວາມຮູ້, ຄວາມສາມາດທາງດ້ານວິຊາການ ເພື່ອພັດທະນາວຽກງານຂອງອົງການໄອຍະການປະຊາຊົນ ໃຫ້ມີຄຸນນະພາບ, ເຂັ້ມແຂງ ແລະ ທັນສະໄໝ ລວມທັງການປະຕິບັດສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນ ທີ່ກ່ຽວຂ້ອງ.

## ພາກທີ II
## ທີ່ຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງອົງການໄອຍະການປະຊາຊົນ

**ມາດຕາ 9 (ປັບປຸງ) ທີ່ຕັ້ງ ແລະ ພາລະບົດບາດ ຂອງອົງການໄອຍະການປະຊາຊົນ**

ອົງການໄອຍະການປະຊາຊົນ ແມ່ນ ອົງການໜຶ່ງຂອງລັດ, ມີພາລະບົດບາດ ສັ່ງຟ້ອງຜູ້ຖືກຫາຂຶ້ນສານ ແລະ ຕິດຕາມກວດກາການເຄົາລົບ ແລະ ປະຕິບັດກົດໝາຍ ຂອງ ອົງການສືບສວນ-ສອບສວນ, ສານປະຊາຊົນ ແລະ ອົງການປະຕິບັດຄຳຕັດສິນຂອງສານ ໃນການດຳເນີນຄະດີຕາມຂະບວນຍຸຕິທຳ.

**ມາດຕາ 10 (ປັບປຸງ) ສິດ ແລະ ໜ້າທີ່ ຂອງອົງການໄອຍະການປະຊາຊົນ**

ອົງການໄອຍະການປະຊາຊົນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ສັ່ງຟ້ອງຜູ້ຖືກຫາຂຶ້ນສານ;

2. ຕິດຕາມກວດກາການປະຕິບັດກົດໝາຍ ຂອງອົງການສືບສວນ-ສອບສວນ;

3. ດຳເນີນການສືບສວນ-ສອບສວນຄະດີໃດໜຶ່ງ ທັງໝົດ ຫຼື ເປັນບາງສ່ວນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ;

4. ຕິດຕາມກວດກາການປະຕິບັດກົດໝາຍຂອງສານ ໃນການດຳເນີນຄະດີ;

5. ຕິດຕາມກວດກາການປະຕິບັດ ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ, ຄຳພິພາກສາຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ;

6. ຕິດຕາມກວດກາການປະຕິບັດກົດໝາຍໃນສະຖານທີ່ກັກຕົວ, ສະຖານທີ່ກັກຂັງ, ຄ້າຍດັດສ້າງ, ຄ້າຍຄຸມຂັງ ແລະ ສະຖານທີ່ປະຕິບັດມາດຕະການບັງຄັບອື່ນຂອງສານ;

7. ຕິດຕາມກວດກາການຄົ້ນຄວ້າ, ການສະເໜີ ແລະ ການຈັດຕັ້ງປະຕິບັດ ການໃຫ້ອະໄພຍະໂທດ ຕາມລັດຖະດຳລັດ ຂອງປະທານປະເທດ;

8. ປະສານສົມທົບກັບອົງການສືບສວນ-ສອບສວນ ແລະ ອົງການອື່ນທີ່ກ່ຽວຂ້ອງ ເພື່ອຕິດຕາມກວດກາການປະຕິບັດກົດໝາຍ, ດຳເນີນການສະກັດກັ້ນ, ຕ້ານອາຊະຍາກຳ, ການກະທຳຜິດ ແລະ ການລະເມີດກົດໝາຍ ພ້ອມທັງລົບລ້າງບັນດາສາເຫດ ແລະ ເງື່ອນໄຂທີ່ພາໃຫ້ການກະທຳຜິດເກີດຂຶ້ນ;

9. ຮື້ຟື້ນຄະດີ ຕາມກົດໝາຍ;

10. ໂຄສະນາ ເຜີຍແຜ່ ກົດໝາຍ ໃນຂົງເຂດວຽກງານໄອຍະການປະຊາຊົນ;

11. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານຂອງຕົນ ຕໍ່ອົງການຂັ້ນເທິງທີ່ກ່ຽວຂ້ອງ ຢ່າງເປັນປົກກະຕິ;

12. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ພາກທີ III
## ລະບົບການຈັດຕັ້ງ ຂອງອົງການໄອຍະການປະຊາຊົນ

### ມາດຕາ 11 (ປັບປຸງ) ລະບົບການຈັດຕັ້ງ ຂອງອົງການໄອຍະການປະຊາຊົນ

ລະບົບການຈັດຕັ້ງ ຂອງອົງການໄອຍະການປະຊາຊົນ ປະກອບດ້ວຍ:

1. ອົງການໄອຍະການປະຊາຊົນສູງສຸດ;
2. ອົງການໄອຍະການປະຊາຊົນພາກ;
3. ອົງການໄອຍະການປະຊາຊົນ ນະຄອນຫຼວງ, ແຂວງ;
4. ອົງການໄອຍະການປະຊາຊົນ ເຂດ ແລະ ເມືອງ, ນະຄອນ ທີ່ໄດ້ຮັບການສ້າງຕັ້ງ;
5. ອົງການໄອຍະການທະຫານ.

ອົງການໄອຍະການປະຊາຊົນ ພາກ, ນະຄອນຫຼວງ, ແຂວງ, ເຂດ ແລະ ເມືອງ, ນະຄອນ ທີ່ໄດ້ຮັບການສ້າງຕັ້ງ ແມ່ນ ອົງການໄອຍະການປະຊາຊົນທ້ອງຖິ່ນ ໂດຍຄະນະປະຈຳສະພາແຫ່ງຊາດ ເປັນຜູ້ຕົກລົງ ພາຍຫຼັງສະພາປະຊາຊົນຂັ້ນແຂວງ ພິຈາລະນາ, ຮັບຮອງເອົາ.

ໃນກໍລະນີຈຳເປັນ ອາດສ້າງຕັ້ງອົງການໄອຍະການປະຊາຊົນສະເພາະ ຕາມການຕົກລົງຂອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ.

## ໝວດທີ 1
## ອົງການໄອຍະການປະຊາຊົນສູງສຸດ

### ມາດຕາ 12 (ປັບປຸງ) ອົງການໄອຍະການປະຊາຊົນສູງສຸດ

ອົງການໄອຍະການປະຊາຊົນສູງສຸດ ແມ່ນ ອົງການສູງສຸດ ຂອງລະບົບອົງການໄອຍະການປະຊາຊົນ, ມີພາລະບົດບາດ ນໍາພາ ຊີ້ນໍາ ອົງການໄອຍະການປະຊາຊົນຂັ້ນລຸ່ມ ແລະ ອົງການໄອຍະການທະຫານ ໃນການສັ່ງຟ້ອງຜູ້ຖືກຫາຂຶ້ນສານ ແລະ ຕິດຕາມກວດກາ ການເຄົາລົບ, ປະຕິບັດກົດໝາຍ ໃນການດໍາເນີນຄະດີຕາມຂະບວນຍຸຕິທໍາ ໃຫ້ຖືກຕ້ອງ ແລະ ເປັນເອກະພາບ ໃນທົ່ວປະເທດ.

### ມາດຕາ 13 (ປັບປຸງ) ສິດ ແລະ ໜ້າທີ່ ຂອງອົງການໄອຍະການປະຊາຊົນສູງສຸດ

ອົງການໄອຍະການປະຊາຊົນສູງສຸດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຕິດຕາມກວດກາການປະຕິບັດກົດໝາຍ ຂອງ ອົງການສືບສວນ-ສອບສວນ, ສານປະຊາຊົນ ແລະ ອົງການປະຕິບັດຄໍາຕັດສິນຂອງສານ;
2. ຕິດຕາມກວດກາການເຄົາລົບ ແລະ ປະຕິບັດໜ້າທີ່ ຂອງອົງການໄອຍະການປະຊາຊົນຂັ້ນລຸ່ມ ແລະ ອົງການໄອຍະການທະຫານ;
3. ແນະນໍາ, ອະທິບາຍ ເນື້ອໃນຂອງກົດໝາຍ ໃນຂົງເຂດທີ່ຕົນຮັບຜິດຊອບ ແລະ ສະໜອງຂໍ້ມູນຂ່າວສານ ທາງດ້ານກົດໝາຍ ໃຫ້ອົງການໄອຍະການປະຊາຊົນຂັ້ນລຸ່ມ ແລະ ອົງການໄອຍະການທະຫານ;
4. ອໍານວຍຄວບຄຸມ, ຄຸ້ມຄອງທາງດ້ານການຈັດຕັ້ງ ແລະ ການເຄື່ອນໄຫວຂອງອົງການໄອຍະການປະຊາຊົນຂັ້ນຂອງຕົນ ແລະ ຂັ້ນລຸ່ມ;
5. ບໍາລຸງສ້າງ ແລະ ຍົກລະດັບ ພະນັກງານ-ລັດຖະກອນ ອົງການໄອຍະການປະຊາຊົນ;
6. ຄົ້ນຄວ້າ ແລະ ສັງລວມ ການເຄື່ອນໄຫວວຽກງານ ຂອງອົງການໄອຍະການປະຊາຊົນ, ວຽກງານສະຖິຕິຄະດີ, ຜູ້ຖືກຫາ, ຜູ້ຖືກຕັດສາງ ແລະ ນັກໂທດໃນທົ່ວປະເທດ;
7. ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການປະຕິບັດໜ້າທີ່ຂອງຕົນ;
8. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານກົດໝາຍ ແລະ ຍຸຕິທໍາ;
9. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານຂອງຕົນ ຕໍ່ຂັ້ນເທິງ;
10. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

## ໝວດທີ 2
## ອົງການໄອຍະການປະຊາຊົນພາກ

### ມາດຕາ 14 (ປັບປຸງ) ອົງການໄອຍະການປະຊາຊົນພາກ

ອົງການໄອຍະການປະຊາຊົນພາກ ແມ່ນ ອົງການໜຶ່ງໃນລະບົບອົງການໄອຍະການປະຊາຊົນ, ມີພາລະບົດບາດ ຕິດຕາມກວດກາ ການເຄົາລົບ ແລະ ປະຕິບັດກົດໝາຍ ໃນການດໍາເນີນຄະດີຕາມຂະບວນຍຸຕິທໍາ ໃຫ້ຖືກຕ້ອງ ແລະ ເປັນເອກະພາບ ໃນຂອບເຂດພາກທີ່ຕົນຮັບຜິດຊອບ.

ອົງການໄອຍະການປະຊາຊົນພາກ ສ້າງຕັ້ງຂຶ້ນຢູ່ ພາກເໜືອ, ພາກກາງ ແລະ ພາກໃຕ້ ຂອງ ສປປ ລາວ.

ອົງການໄອຍະການປະຊາຊົນພາກ ຕັ້ງຢູ່ ນະຄອນຫຼວງ ຫຼື ແຂວງໃດໜຶ່ງ ໂດຍກວມເອົານະຄອນຫຼວງ, ແຂວງຈຳນວນໜຶ່ງ.

**ມາດຕາ 15 (ປັບປຸງ) ສິດ ແລະ ໜ້າທີ່ ຂອງອົງການໄອຍະການປະຊາຊົນພາກ**

ອົງການໄອຍະການປະຊາຊົນພາກ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຕິດຕາມກວດກາການເຄົາລົບ ແລະ ປະຕິບັດກົດໝາຍ ຂອງ ອົງການສືບສວນ-ສອບສວນ, ສານປະຊາຊົນ ແລະ ອົງການປະຕິບັດຄຳຕັດສິນຂອງສານ;

2. ຕິດຕາມກວດກາການປະຕິບັດໜ້າທີ່ ຂອງອົງການໄອຍະການປະຊາຊົນ ນະຄອນຫຼວງ, ແຂວງ;

3. ແນະນຳ ແລະ ສະໜອງຂໍ້ມູນ ຂ່າວສານທາງດ້ານກົດໝາຍ ໃຫ້ແກ່ອົງການໄອຍະການປະຊາຊົນ ນະຄອນຫຼວງ, ແຂວງ;

4. ຄຸ້ມຄອງທາງດ້ານການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງອົງການໄອຍະການປະຊາຊົນຂັ້ນຂອງຕົນ;

5. ຄົ້ນຄວ້າ ແລະ ສັງລວມ ການລາຍງານກ່ຽວກັບການປະຕິບັດໜ້າທີ່ ຂອງອົງການໄອຍະການປະຊາຊົນ ນະຄອນຫຼວງ, ແຂວງ ວຽກງານສະຖິຕິຄະດີ, ຜູ້ຖືກຫາ, ຜູ້ຖືກດັດສ້າງ ແລະ ນັກໂທດ;

6. ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການປະຕິບັດໜ້າທີ່ຂອງຕົນ;

7. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ ຕາມການຕົກລົງຂອງຂັ້ນເທິງ;

8. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານຂອງຕົນ ຕໍ່ ອົງການໄອຍະການປະຊາຊົນສູງສຸດ ຢ່າງເປັນປົກກະຕິ;

9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ໝວດທີ 3
## ອົງການໄອຍະການປະຊາຊົນ ນະຄອນຫຼວງ, ແຂວງ

**ມາດຕາ 16 ອົງການໄອຍະການປະຊາຊົນ ນະຄອນຫຼວງ, ແຂວງ**

ອົງການໄອຍະການປະຊາຊົນ ນະຄອນຫຼວງ, ແຂວງ ແມ່ນ ອົງການໜຶ່ງໃນລະບົບອົງການໄອຍະການປະຊາຊົນ, ມີພາລະບົດບາດ ສັ່ງຟ້ອງຜູ້ຖືກຫາຂຶ້ນສານ ແລະ ຕິດຕາມກວດກາການເຄົາລົບ ແລະ ປະຕິບັດກົດໝາຍ ໃນການດຳເນີນຄະດີຕາມຂະບວນຍຸຕິທຳ ໃຫ້ຖືກຕ້ອງ ແລະ ເປັນເອກະພາບ ໃນຂອບເຂດ ນະຄອນຫຼວງ, ແຂວງ.

**ມາດຕາ 17 (ປັບປຸງ) ສິດ ແລະ ໜ້າທີ່ ຂອງອົງການໄອຍະການປະຊາຊົນ ນະຄອນຫຼວງ, ແຂວງ**

ອົງການໄອຍະການປະຊາຊົນ ນະຄອນຫຼວງ, ແຂວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຕິດຕາມກວດກາການເຄົາລົບ ແລະ ປະຕິບັດກົດໝາຍ ຂອງ ອົງການສືບສວນ-ສອບສວນ, ສານປະຊາຊົນ ແລະ ອົງການປະຕິບັດຄຳຕັດສິນຂອງສານ;

2. ຕິດຕາມກວດກາການປະຕິບັດໜ້າທີ່ ຂອງອົງການໄອຍະການປະຊາຊົນ ເຂດ ແລະ ເມືອງ, ນະຄອນ ທີ່ໄດ້ຮັບການສ້າງຕັ້ງ;

3. ແນະນຳ ແລະ ສະໜອງຂໍ້ມູນ ຂ່າວສານທາງດ້ານກົດໝາຍ ໃຫ້ແກ່ອົງການໄອຍະການປະຊາຊົນ ເຂດ ແລະ ເມືອງ, ນະຄອນ ທີ່ໄດ້ຮັບການສ້າງຕັ້ງ;

4. ຄຸ້ມຄອງທາງດ້ານການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງອົງການໄອຍະການປະຊາຊົນຂັ້ນຂອງຕົນ ແລະ ອົງການໄອຍະການປະຊາຊົນ ເຂດ ແລະ ເມືອງ, ນະຄອນ ທີ່ໄດຮັບການສ້າງຕັ້ງ;

5. ຄົ້ນຄວ້າ ແລະ ສັງລວມການລາຍງານກ່ຽວກັບການປະຕິບັດໜ້າທີ່ ຂອງອົງການໄອຍະການປະຊາຊົນ ເຂດ ແລະ ເມືອງ, ນະຄອນ ທີ່ໄດ້ຮັບການສ້າງຕັ້ງ;

6. ຄົ້ນຄວ້າ ແລະ ສັງລວມ ວຽກງານສະຖິຕິຄະດີ, ຜູ້ຖືກຫາ, ຜູ້ຖືກກັກຂັງ ແລະ ນັກໂທດ;

7. ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການປະຕິບັດໜ້າທີ່ຂອງຕົນ;

8. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ ຕາມການຕົກລົງຂອງຂັ້ນເທິງ;

9. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານຂອງຕົນ ຕໍ່ຂັ້ນເທິງຂອງຕົນ;

10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ໝວດທີ 4
## ອົງການໄອຍະການປະຊາຊົນເຂດ

### ມາດຕາ 18 (ປັບປຸງ) ອົງການໄອຍະການປະຊາຊົນເຂດ

ອົງການໄອຍະການປະຊາຊົນເຂດ ແມ່ນ ອົງການໜຶ່ງໃນລະບົບອົງການໄອຍະການປະຊາຊົນ, ມີພາລະບົດບາດ ສັ່ງຟ້ອງຜູ້ຖືກຫາຂຶ້ນສານ ແລະ ຕິດຕາມກວດກາການເຄົາລົບ ແລະ ປະຕິບັດກົດໝາຍ ໃນການດຳເນີນຄະດີຕາມຂະບວນຍຸຕິທຳ ໃຫ້ຖືກຕ້ອງ ແລະ ເປັນເອກະພາບ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ.

ອົງການໄອຍະການປະຊາຊົນເຂດ ສ້າງຕັ້ງຂຶ້ນ ໂດຍເອົາເມືອງ, ນະຄອນໃດໜຶ່ງ ຫຼື ຫຼາຍເມືອງ, ນະຄອນ ມາໂຮມເຂົ້າກັນເປັນເຂດໜຶ່ງ ຕາມສະພາບພູມສາດ, ການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ ຫຼື ມີຄະດີເກີດຂຶ້ນຫຼາຍ.

### ມາດຕາ 19 (ປັບປຸງ) ສິດ ແລະ ໜ້າທີ່ ຂອງອົງການໄອຍະການປະຊາຊົນເຂດ

ອົງການໄອຍະການປະຊາຊົນເຂດ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຕິດຕາມກວດກາການເຄົາລົບ ແລະ ປະຕິບັດກົດໝາຍ ຂອງ ອົງການສືບສວນ-ສອບສວນ, ສານປະຊາຊົນ ແລະ ອົງການປະຕິບັດຄຳຕັດສິນຂອງສານ;

2. ຄຸ້ມຄອງທາງດ້ານການຈັດຕັ້ງ ແລະ ການເຄື່ອນໄຫວຂອງຕົນ;

3. ຄົ້ນຄວ້າ ແລະ ສັງລວມ ການຈັດຕັ້ງປະຕິບັດໜ້າທີ່, ເກັບກຳສະຖິຕິຄະດີ, ຜູ້ຖືກຫາ, ຜູ້ຖືກກັກຂັງ ແລະ ນັກໂທດ;

4. ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການປະຕິບັດໜ້າທີ່ຂອງຕົນ;

5. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານຂອງຕົນ ຕໍ່ຂັ້ນເທິງຂອງຕົນ;

6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 20 (ໃໝ່) ຫ້ອງການອົງການໄອຍະການປະຊາຊົນເຂດ ປະຈຳເມືອງ, ນະຄອນ**

ຫ້ອງການອົງການໄອຍະການປະຊາຊົນເຂດ ປະຈຳເມືອງ, ນະຄອນ ແມ່ນ ການຈັດຕັ້ງໜຶ່ງ ຂອງອົງການໄອຍະການປະຊາຊົນເຂດ.

ເມືອງ, ນະຄອນໃດ ທີ່ບໍ່ມີອົງການໄອຍະການປະຊາຊົນເຂດຕັ້ງຢູ່ນັ້ນ ໃຫ້ມີຫ້ອງການອົງການໄອຍະການປະຊາຊົນເຂດ ປະຈຳເມືອງ, ນະຄອນ ໂດຍແຕ່ງຕັ້ງພະນັກງານໄອຍະການປະຊາຊົນ ຫຼື ພະນັກງານວິຊາການກົດໝາຍ ຂອງອົງການໄອຍະການປະຊາຊົນເຂດ ຈຳນວນໜຶ່ງ ໄປປະຈຳຢູ່ ເພື່ອນຳໃຊ້ສິດ ແລະ ປະຕິບັດໜ້າທີ່ຂອງອົງການໄອຍະການປະຊາຊົນເຂດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງຫ້ອງການອົງການໄອຍະການປະຊາຊົນເຂດ ປະຈຳເມືອງ, ນະຄອນ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 21 (ໃໝ່) ອົງການໄອຍະການປະຊາຊົນ ເມືອງ, ນະຄອນ**

ເມືອງ, ນະຄອນໃດ ຫາກມີເງື່ອນໄຂຄົບຖ້ວນ ກໍສາມາດສ້າງຕັ້ງອົງການໄອຍະການປະຊາຊົນຂຶ້ນ.

ອົງການໄອຍະການປະຊາຊົນ ເມືອງ, ນະຄອນ ທີ່ໄດ້ຮັບການສ້າງຕັ້ງ ແມ່ນ ອົງການໜຶ່ງໃນລະບົບອົງການໄອຍະການປະຊາຊົນ, ມີພາລະບົດບາດ ສັ່ງຟ້ອງຜູ້ຖືກຫາຂຶ້ນສານ ແລະ ຕິດຕາມກວດກາການເຄົາລົບ ແລະ ປະຕິບັດກົດໝາຍ ໃນການດຳເນີນຄະດີຕາມຂະບວນຍຸຕິທຳ ໃຫ້ຖືກຕ້ອງ ແລະ ເປັນເອກະພາບ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ.

ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງອົງການໄອຍະການປະຊາຊົນ ເມືອງ, ນະຄອນ ໃຫ້ປະຕິບັດຄືກັນກັບພາລະບົດບາດ, ສິດ ແລະ ໜ້າທີ່ ຂອງອົງການໄອຍະການປະຊາຊົນເຂດ.

## ໝວດທີ 5
## ອົງການໄອຍະການທະຫານ

**ມາດຕາ 22 (ປັບປຸງ) ອົງການໄອຍະການທະຫານ**

ອົງການໄອຍະການທະຫານ ແມ່ນ ອົງການໜຶ່ງໃນລະບົບອົງການໄອຍະການປະຊາຊົນ ແຫ່ງ ສປປ ລາວ ທີ່ສ້າງຕັ້ງຂຶ້ນໃນກອງທັບ, ມີພາລະບົດບາດ ສັ່ງຟ້ອງຜູ້ຖືກຫາຂຶ້ນສານທະຫານ ແລະ ຕິດຕາມກວດກາການເຄົາລົບ ແລະ ປະຕິບັດກົດໝາຍ ຂອງການຈັດຕັ້ງ, ກົມກອງ, ນາຍ ແລະ ພົນທະຫານ, ກຳມະກອນ, ພາລະກອນປ້ອງກັນຊາດ ແລະ ຂອງບຸກຄົນນອກກອງທັບ ຕາມກົດໝາຍ.

**ມາດຕາ 23 (ໃໝ່) ສິດ ແລະ ໜ້າທີ່ ຂອງອົງການໄອຍະການທະຫານ**

ສິດ ແລະ ໜ້າທີ່ຂອງອົງການໄອຍະການທະຫານ ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍອົງການໄອຍະການທະຫານ.

# ພາກທີ IV
# ໂຄງປະກອບ ການຈັດຕັ້ງ ແລະ ບຸກຄະລາກອນ ຂອງອົງການໄອຍະການປະຊາຊົນ
## ໝວດທີ 1
## ໂຄງປະກອບການຈັດຕັ້ງ ຂອງອົງການໄອຍະການປະຊາຊົນ

**ມາດຕາ 24 (ປັບປຸງ) ໂຄງປະກອບການຈັດຕັ້ງ ຂອງອົງການໄອຍະການປະຊາຊົນ**

ອົງການໄອຍະການປະຊາຊົນ ມີໂຄງປະກອບການຈັດຕັ້ງ ດັ່ງນີ້:

1. ອົງການໄອຍະການປະຊາຊົນສູງສຸດ ມີ ຄະນະກຳມະການໄອຍະການປະຊາຊົນສູງສຸດ, ຫ້ອງການ, ບັນດາກົມ, ສະຖາບັນຄົ້ນຄວ້າ ແລະ ຝຶກອົບຮົມໄອຍະການ ແລະ ບັນດາພະແນກ;

2. ອົງການໄອຍະການປະຊາຊົນພາກ ມີ ຄະນະກຳມະການໄອຍະການປະຊາຊົນພາກ, ຫ້ອງການ ແລະ ບັນດາພະແນກ;

3. ອົງການໄອຍະການປະຊາຊົນ ນະຄອນຫຼວງ, ແຂວງ ມີ ຄະນະກຳມະການໄອຍະການປະຊາຊົນ ນະຄອນຫຼວງ, ແຂວງ, ຫ້ອງການ ແລະ ບັນດາຂະແໜງ;

4. ອົງການໄອຍະການປະຊາຊົນເຂດ ມີ ຄະນະກຳມະການໄອຍະການປະຊາຊົນເຂດ, ຫ້ອງການ ແລະ ບັນດາໜ່ວຍງານ. ສຳລັບ ອົງການໄອຍະການປະຊາຊົນ ເມືອງ, ນະຄອນ ທີ່ໄດ້ຮັບການສ້າງຕັ້ງຂຶ້ນ ໃຫ້ມີໂຄງປະກອບການຈັດຕັ້ງຄືກັນກັບອົງການໄອຍະການປະຊາຊົນເຂດ.

**ມາດຕາ 25 (ປັບປຸງ) ຄະນະກຳມະການໄອຍະການປະຊາຊົນສູງສຸດ**

ຄະນະກຳມະການໄອຍະການປະຊາຊົນສູງສຸດ ແມ່ນ ການຈັດຕັ້ງຂອງອົງການໄອຍະການປະຊາຊົນສູງສຸດ, ມີພາລະບົດບາດ ຕົກລົງບັນຫາສຳຄັນ ແລະ ມີລັກສະນະຍຸດທະສາດ ກ່ຽວກັບວຽກງານຂອງອົງການໄອຍະການປະຊາຊົນ ເພື່ອຮັບປະກັນໃຫ້ລະບົບການຈັດຕັ້ງ ຂອງອົງການໄອຍະການປະຊາຊົນເຄື່ອນໄຫວຢ່າງມີປະສິດທິພາບ.

ຄະນະກຳມະການໄອຍະການປະຊາຊົນສູງສຸດ ປະກອບດ້ວຍ ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ເປັນປະທານ, ບັນດາຮອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ ເປັນຮອງປະທານ, ຫົວໜ້າຫ້ອງການ, ບັນດາຫົວໜ້າກົມ ແລະ ພະນັກງານໄອຍະການປະຊາຊົນຈຳນວນໜຶ່ງ ຂອງອົງການໄອຍະການປະຊາຊົນສູງສຸດ ເປັນກຳມະການ ໂດຍຄະນະປະຈຳສະພາແຫ່ງຊາດ ເປັນຜູ້ແຕ່ງຕັ້ງ ຕາມການສະເໜີຂອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ.

ຈຳນວນສະມາຊິກ ຂອງຄະນະກຳມະການໄອຍະການປະຊາຊົນສູງສຸດ ບໍ່ໃຫ້ເກີນ ສິບຫ້າຄົນ.

ຄະນະກຳມະການໄອຍະການປະຊາຊົນສູງສຸດ ເຄື່ອນໄຫວວຽກງານຂອງຕົນ ດ້ວຍການເປີດກອງປະຊຸມຢ່າງໜ້ອຍ ສາມເດືອນ ຕໍ່ເທື່ອ ຕາມການຮຽກໂຮມຂອງປະທານຄະນະກຳມະການໄອຍະການປະຊາຊົນສູງສຸດ.

ມະຕິກອງປະຊຸມ ຂອງຄະນະກຳມະການໄອຍະການປະຊາຊົນສູງສຸດ ຖືເອົາຕາມສຽງສ່ວນຫຼາຍ.

**ມາດຕາ 26 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຄະນະກຳມະການໄອຍະການປະຊາຊົນສູງສຸດ**

ຄະນະກຳມະການໄອຍະການປະຊາຊົນສູງສຸດ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຕົກລົງຮັບຮອງເອົາແຜນຍຸດທະສາດ ກ່ຽວກັບການພັດທະນາວຽກງານໄອຍະການປະຊາຊົນ;

2. ຄົ້ນຄວ້າ ແລະ ໃຫ້ຄຳເຫັນຕໍ່ຮ່າງນິຕິກຳ ຂອງອົງການໄອຍະການປະຊາຊົນ;

3. ຄົ້ນຄວ້າ ແລະ ໃຫ້ຄຳເຫັນຕໍ່ ຄຳຕັດສິນ ຫຼື ຄຳພິພາກສາ ປະຫານຊີວິດ ທີ່ໃຊ້ໄດ້ຢ່າງເດັດຂາດ ແລະ ການຮື້ຟື້ນຄະດີ;

4. ຄົ້ນຄວ້າ ແລະ ໃຫ້ຄຳເຫັນຕໍ່ການສະເໜີ ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຫົວໜ້າ ແລະ ຮອງຫົວໜ້າ ຫ້ອງການ, ບັນດາກົມ, ສະຖາບັນຄົ້ນຄວ້າ ແລະ ຝຶກອົບຮົມໄອຍະການ ຂອງອົງການໄອຍະການປະຊາຊົນສູງສຸດ, ຫົວໜ້າ ແລະ ຮອງຫົວໜ້າ ອົງການໄອຍະການປະຊາຊົນທ້ອງຖິ່ນ;

5. ຄົ້ນຄວ້າ ແລະ ໃຫ້ຄຳເຫັນຕໍ່ການສ້າງຕັ້ງ ຫຼື ຍຸບເລີກກົງຈັກ ຂອງອົງການໄອຍະການປະຊາຊົນ;

6. ຄົ້ນຄວ້າ ແລະ ໃຫ້ຄຳເຫັນຕໍ່ແຜນການ, ແຜນງົບປະມານປະຈຳປີ ຂອງອົງການໄອຍະການປະຊາຊົນ;

7. ຄົ້ນຄວ້າ ແລະ ໃຫ້ຄຳເຫັນຕໍ່ວຽກງານອື່ນ ທີ່ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ເຫັນວ່າມີຄວາມຈຳເປັນ.

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 27 (ປັບປຸງ) ຄະນະກຳມະການໄອຍະການປະຊາຊົນທ້ອງຖິ່ນ**

ຄະນະກຳມະການໄອຍະການປະຊາຊົນທ້ອງຖິ່ນ ແມ່ນ ການຈັດຕັ້ງ ຂອງອົງການໄອຍະການປະຊາຊົນທ້ອງຖິ່ນ, ມີພາລະບົດບາດ ຕົກລົງບັນຫາສຳຄັນ ແລະ ມີລັກສະນະຍຸດທະສາດ ກ່ຽວກັບວຽກງານຂອງຕົນ ເພື່ອຮັບປະກັນໃຫ້ລະບົບການຈັດຕັ້ງ ຂອງອົງການໄອຍະການປະຊາຊົນທ້ອງຖິ່ນ ເຄື່ອນໄຫວຢ່າງມີປະສິດທິພາບ.

ຄະນະກຳມະການໄອຍະການປະຊາຊົນທ້ອງຖິ່ນ ປະກອບດ້ວຍ ຫົວໜ້າອົງການໄອຍະການປະຊາຊົນ ເປັນປະທານ, ບັນດາຮອງຫົວໜ້າອົງການໄອຍະການປະຊາຊົນ ເປັນຮອງປະທານ, ຫົວໜ້າຫ້ອງການ, ບັນດາຫົວໜ້າພະແນກ, ຂະແໜງ, ໜ່ວຍງານ ແລະ ພະນັກງານໄອຍະການປະຊາຊົນຈຳນວນໜຶ່ງ ຂອງອົງການໄອຍະການປະຊາຊົນທ້ອງຖິ່ນ ເປັນກຳມະການ ໂດຍຫົວໜ້າອົງການໄອຍະການປະຊາຊົນສູງສຸດ ເປັນຜູ້ແຕ່ງຕັ້ງ ພາຍຫຼັງຄະນະປະຈຳສະພາປະຊາຊົນຂັ້ນແຂວງ ບ່ອນອົງການໄອຍະການປະຊາຊົນນັ້ນຕັ້ງຢູ່ ພິຈາລະນາ, ຮັບຮອງເອົາ.

ຈຳນວນສະມາຊິກ ຂອງຄະນະກຳມະການໄອຍະການປະຊາຊົນທ້ອງຖິ່ນ ບໍ່ໃຫ້ເກີນ ເກົ້າຄົນ.

ຄະນະກຳມະການໄອຍະການປະຊາຊົນທ້ອງຖິ່ນ ເຄື່ອນໄຫວວຽກງານຂອງຕົນ ດ້ວຍການເປີດກອງປະຊຸມຢ່າງໜ້ອຍ ສາມເດືອນ ຕໍ່ເທື່ອ ຕາມການຮຽກໂຮມ ຂອງປະທານຄະນະກຳມະການໄອຍະການປະຊາຊົນທ້ອງຖິ່ນ.

ມະຕິກອງປະຊຸມຂອງຄະນະກຳມະການໄອຍະການປະຊາຊົນທ້ອງຖິ່ນ ຖືເອົາຕາມສຽງສ່ວນຫຼາຍ.

**ມາດຕາ 28 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຄະນະກຳມະການໄອຍະການປະຊາຊົນທ້ອງຖິ່ນ**

ຄະນະກຳມະການໄອຍະການປະຊາຊົນທ້ອງຖິ່ນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຕົກລົງຮັບຮອງເອົາແຜນພັດທະນາວຽກງານໄອຍະການປະຊາຊົນຂອງຕົນ;

2. ຄົ້ນຄວ້າ ແລະ ໃຫ້ຄຳເຫັນຕໍ່ການສະເໜີ ສ້າງຕັ້ງ ຫຼື ຍຸບເລີກກົງຈັກ ຂອງອົງການໄອຍະການປະຊາຊົນຂອງຕົນ;

3. ຄົ້ນຄວ້າ ແລະ ໃຫ້ຄຳເຫັນຕໍ່ການສະເໜີ ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຫົວໜ້າ ແລະ ຮອງຫົວໜ້າຫ້ອງການ, ບັນດາພະແນກ, ຂະແໜງ, ໜ່ວຍງານ ຂອງອົງການໄອຍະການປະຊາຊົນຂອງຕົນ;

4. ຄົ້ນຄວ້າ ແລະ ໃຫ້ຄຳເຫັນຕໍ່ຄະດີທີ່ມີຄວາມຫຍຸ້ງຍາກສັບສົນ, ການກະທຳຜິດທີ່ຈະຖືກລົງໂທດຕັດອິດສະລະພາບຕະຫຼອດຊີວິດ ຫຼື ປະຫານຊີວິດ;

5. ຄົ້ນຄວ້າ ແລະ ໃຫ້ຄຳເຫັນຕໍ່ ແຜນການ, ແຜນງົບປະມານ ປະຈຳປີ ຂອງອົງການໄອຍະການປະຊາຊົນຂອງຕົນ;

6. ຄົ້ນຄວ້າ ແລະ ໃຫ້ຄຳເຫັນ ຕໍ່ວຽກງານອື່ນ ທີ່ຫົວໜ້າອົງການໄອຍະການປະຊາຊົນ ເຫັນວ່າມີຄວາມຈຳເປັນ;

7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ໝວດທີ 2
## ໂຄງປະກອບບຸກຄະລາກອນ ຂອງອົງການໄອຍະການປະຊາຊົນ

### ມາດຕາ 29 (ປັບປຸງ) ໂຄງປະກອບບຸກຄະລາກອນ ຂອງອົງການໄອຍະການປະຊາຊົນ

ອົງການໄອຍະການປະຊາຊົນ ປະກອບດ້ວຍ ບຸກຄະລາກອນ ດັ່ງນີ້:

1. ຫົວໜ້າອົງການໄອຍະການປະຊາຊົນສູງສຸດ;
2. ບັນດາຮອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ ໃນນີ້ ໜຶ່ງທ່ານ ເປັນຫົວໜ້າອົງການໄອຍະການທະຫານຂັ້ນສູງ;
3. ຫົວໜ້າ, ບັນດາຮອງຫົວໜ້າ ອົງການໄອຍະການປະຊາຊົນພາກ;
4. ຫົວໜ້າ, ບັນດາຮອງຫົວໜ້າ ອົງການໄອຍະການປະຊາຊົນ ນະຄອນຫຼວງ, ແຂວງ;
5. ຫົວໜ້າ, ບັນດາຮອງຫົວໜ້າ ອົງການໄອຍະການປະຊາຊົນ ເຂດ ແລະ ເມືອງ, ນະຄອນ ທີ່ໄດ້ຮັບການສ້າງຕັ້ງ.

ນອກຈາກນີ້ ອົງການໄອຍະການປະຊາຊົນແຕ່ລະຂັ້ນ ຍັງມີບັນດາພະນັກງານໄອຍະການປະຊາຊົນ, ຜູ້ຊ່ວຍພະນັກງານໄອຍະການປະຊາຊົນ, ພະນັກງານວິຊາການກົດໝາຍ ແລະ ພະນັກງານບໍລິຫານ.

### ມາດຕາ 30 (ປັບປຸງ) ມາດຕະຖານຂອງຫົວໜ້າອົງການໄອຍະການປະຊາຊົນ ແລະ ພະນັກງານໄອຍະການປະຊາຊົນ

ຫົວໜ້າອົງການໄອຍະການປະຊາຊົນ ແລະ ພະນັກງານໄອຍະການປະຊາຊົນ ມີມາດຕະຖານລວມ ດັ່ງນີ້:

1. ເປັນພົນລະເມືອງລາວ ໂດຍກຳເນີດ, ມີອາຍຸແຕ່ ຊາວເຈັດປີ ຂຶ້ນໄປ;
2. ມີຄຸນທາດການເມືອງໜັກແໜ້ນ, ມີຄຸນສົມບັດສິນທຳປະຕິວັດ, ມີຈັນຍາບັນ, ມີຈັນຍາທຳ, ມີຄວາມສັດຊື່ບໍລິສຸດ ຕໍ່ການປະຕິບັດໜ້າທີ່ຂອງຕົນ;
3. ມີລະດັບການສຶກສາດ້ານກົດໝາຍ ແຕ່ຊັ້ນສູງຂຶ້ນໄປ, ໄດ້ຝຶກອົບຮົມ ທິດສະດີການເມືອງ ແລະ ການປົກຄອງ ແລະ ວຽກງານໄອຍະການປະຊາຊົນ;
4. ບໍ່ເຄີຍຖືກສານຕັດສິນລົງໂທດຕັດອິດສະລະພາບ ຍ້ອນການກະທຳຜິດໂດຍເຈດຕະນາ;
5. ມີສຸຂະພາບດີ.

ຫົວໜ້າອົງການໄອຍະການປະຊາຊົນ ແລະ ພະນັກງານໄອຍະການປະຊາຊົນ ຍັງມີມາດຕະຖານສະເພາະ, ຊັ້ນ ແລະ ຂັ້ນຂອງຕົນ ຊຶ່ງໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

### ມາດຕາ 31 (ປັບປຸງ) ການເລືອກຕັ້ງ, ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ

ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ຖືກເລືອກຕັ້ງ ຫຼື ປົດຕຳແໜ່ງ ໂດຍສະພາແຫ່ງຊາດ ຕາມການສະເໜີຂອງປະທານປະເທດ, ມີອາຍຸການເທົ່າກັບອາຍຸການຂອງສະພາແຫ່ງຊາດ ແລະ ດຳລົງຕຳແໜ່ງບໍ່ເກີນສອງສະໄໝ ຕິດຕໍ່ກັນ.

ຮອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງ ໂດຍປະທານປະເທດ ຕາມການສະເໜີຂອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ.

ຫົວໜ້າອົງການໄອຍະການປະຊາຊົນ ພາກ, ນະຄອນຫຼວງ, ແຂວງ, ເຂດ ແລະ ເມືອງ, ນະຄອນ ທີ່ໄດ້ຮັບການສ້າງຕັ້ງ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງ ໂດຍຫົວໜ້າອົງການໄອຍະການປະຊາຊົນສູງສຸດ ພາຍຫຼັງສະພາປະຊາຊົນຂັ້ນແຂວງ ບ່ອນອົງການໄອຍະການປະຊາຊົນນັ້ນຕັ້ງຢູ່ ພິຈາລະນາ, ຮັບຮອງເອົາ.

ຮອງຫົວໜ້າອົງການໄອຍະການປະຊາຊົນ ພາກ, ນະຄອນຫຼວງ, ແຂວງ, ເຂດ ແລະ ເມືອງ, ນະຄອນ ທີ່ໄດ້ຮັບການສ້າງຕັ້ງ, ພະນັກງານໄອຍະການປະຊາຊົນ, ຜູ້ຊ່ວຍພະນັກງານໄອຍະການປະຊາຊົນ, ພະນັກງານວິຊາການກົດໝາຍ ແລະ ພະນັກງານບໍລິຫານ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງ ໂດຍຫົວໜ້າອົງການໄອຍະການປະຊາຊົນສູງສຸດ.

ຮອງຫົວໜ້າອົງການໄອຍະການທະຫານຂັ້ນສູງ, ຫົວໜ້າ ແລະ ຮອງຫົວໜ້າ ອົງການໄອຍະການທະຫານພາກ, ນະຄອນຫຼວງ, ແຂວງ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງ ໂດຍຫົວໜ້າອົງການໄອຍະການປະຊາຊົນສູງສຸດ ຕາມການສະເໜີຂອງຫົວໜ້າອົງການໄອຍະການທະຫານຂັ້ນສູງ ພາຍຫຼັງໄດ້ຮັບການເຫັນດີຈາກລັດຖະມົນຕີກະຊວງປ້ອງກັນປະເທດ.

ພະນັກງານໄອຍະການທະຫານ, ຜູ້ຊ່ວຍພະນັກງານໄອຍະການທະຫານ, ພະນັກງານວິຊາການກົດໝາຍ ແລະ ພະນັກງານບໍລິຫານ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງ ໂດຍຫົວໜ້າອົງການໄອຍະການທະຫານຂັ້ນສູງ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍອົງການໄອຍະການທະຫານ.

**ມາດຕາ 32 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ**

ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ນໍາພາ ຊີ້ນໍາ ການຕິດຕາມກວດກາ ການເຄົາລົບ, ປະຕິບັດກົດໝາຍ ຂອງ ອົງການສືບສວນ-ສອບສວນ, ສານປະຊາຊົນ ແລະ ອົງການປະຕິບັດຄໍາຕັດສິນຂອງສານ ໃນຂອບເຂດທົ່ວປະເທດ;
2. ນໍາພາ ຊີ້ນໍາ ແລະ ກວດກາ ການປະຕິບັດໜ້າທີ່ຂອງພະນັກງານ-ລັດຖະກອນ ອົງການໄອຍະການປະຊາຊົນ;
3. ຊີ້ນໍາວຽກງານຄົ້ນຄວ້າ, ສະເໜີຮ່າງກົດໝາຍ ແລະ ນິຕິກໍາອື່ນ ຕໍ່ກອງປະຊຸມສະພາແຫ່ງຊາດ ຫຼື ຕໍ່ຄະນະປະຈໍາສະພາແຫ່ງຊາດ ພິຈາລະນາ;
4. ສະເໜີຄະນະປະຈໍາສະພາແຫ່ງຊາດ ພິຈາລະນາ ກ່ຽວກັບ ການສ້າງຕັ້ງອົງການໄອຍະການປະຊາຊົນທ້ອງຖິ່ນ, ການຕີຄວາມໝາຍບົດບັນຍັດໃດໜຶ່ງຂອງກົດໝາຍ ເພື່ອປະຕິບັດໃຫ້ຖືກຕ້ອງ ແລະ ເປັນເອກະພາບ;
5. ໃຫ້ຄວາມເຫັນກ່ຽວກັບການດໍາເນີນຄະດີອາຍາ ຊຶ່ງຫົວໜ້າ, ຮອງຫົວໜ້າອົງການໄອຍະການປະຊາຊົນ, ພະນັກງານໄອຍະການປະຊາຊົນ ແລະ ຜູ້ຊ່ວຍພະນັກງານໄອຍະການປະຊາຊົນ ທີ່ຖືກຫາວ່າເປັນຜູ້ກະທໍາຜິດ;
6. ລົບລ້າງຄໍາສັ່ງ ຂອງຫົວໜ້າອົງການໄອຍະການປະຊາຊົນຂັ້ນລຸ່ມ ທີ່ບໍ່ຖືກຕ້ອງຕາມກົດໝາຍ;
7. ຖະແຫຼງ ກ່ຽວກັບຄະດີ ຕໍ່ສານປະຊາຊົນສູງສຸດ;
8. ສະເໜີຄັດຄ້ານ ຄໍາສັ່ງ, ຄໍາຊີ້ຂາດ, ຄໍາຕັດສິນ ຫຼື ຄໍາພິພາກສາ ຂອງສານປະຊາຊົນ;
9. ສະເໜີຮື້ຟື້ນ ຄະດີຕາມກົດໝາຍ;
10. ສະເໜີ ປະທານປະເທດ ແຕ່ງຕັ້ງ ຫຼື ປົດຕໍາແໜ່ງ ຮອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ;
11. ກໍານົດໂຄງປະກອບກົງຈັກການຈັດຕັ້ງ, ຈໍານວນບຸກຄະລາກອນ ຂອງອົງການໄອຍະການປະຊາຊົນ;

12. ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຫົວໜ້າ, ຮອງຫົວໜ້າ ອົງການໄອຍະການປະຊາຊົນ, ຄະນະກຳມະການໄອຍະການປະຊາຊົນທ້ອງຖິ່ນ, ພະນັກງານໄອຍະການປະຊາຊົນ, ຜູ້ຊ່ວຍພະນັກງານໄອຍະການປະຊາຊົນ, ພະນັກງານວິຊາການກົດໝາຍ ແລະ ພະນັກງານບໍລິຫານ ຂອງອົງການໄອຍະການປະຊາຊົນ;

13. ຮຽກໂຮມ ແລະ ເປັນປະທານກອງປະຊຸມຄະນະກຳມະການໄອຍະການປະຊາຊົນສູງສຸດ;

14. ເຂົ້າຮ່ວມ ກອງປະຊຸມໃຫຍ່ຜູ້ພິພາກສາ ແລະ ລາຍງານ ຕໍ່ຄະນະປະຈຳສະພາແຫ່ງຊາດ ກ່ຽວກັບມະຕິກອງປະຊຸມໃຫຍ່ຜູ້ພິພາກສາ ທີ່ເຫັນວ່າບໍ່ຖືກຕ້ອງ ຕາມລັດຖະທຳມະນູນ ແລະ ກົດໝາຍ;

15. ລາຍງານສະພາບການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານ ຂອງອົງການໄອຍະການປະຊາຊົນ ຕໍ່ ກອງປະຊຸມສະພາແຫ່ງຊາດ ຫຼື ຄະນະປະຈຳສະພາແຫ່ງຊາດໃນເວລາສະພາແຫ່ງຊາດບໍ່ໄດ້ເປີດກອງປະຊຸມ;

16. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 33 (ປັບປຸງ) ຮອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ**

ຮອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ ມີໜ້າທີ່ຊ່ວຍ ຫົວໜ້າອົງການໄອຍະການປະຊາຊົນສູງສຸດໃນການປະຕິບັດໜ້າທີ່ ແລະ ຮັບຜິດຊອບວຽກງານໃດໜຶ່ງສະເພາະ ຕາມການມອບໝາຍຂອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ.

ໃນກໍລະນີ ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ຕິດຂັດ ແມ່ນ ຮອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ ທີ່ໄດ້ຮັບມອບໝາຍນັ້ນ ເປັນຜູ້ຮັກສາການແທນ.

**ມາດຕາ 34 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຫົວໜ້າອົງການໄອຍະການປະຊາຊົນພາກ**

ຫົວໜ້າອົງການໄອຍະການປະຊາຊົນພາກ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ນຳພາ ຊີ້ນຳ ການຕິດຕາມກວດກາການເຄົາລົບ ແລະ ປະຕິບັດກົດໝາຍ ຂອງ ອົງການສືບສວນ-ສອບສວນ, ສານປະຊາຊົນ ແລະ ອົງການປະຕິບັດຄຳຕັດສິນຂອງສານ;

2. ນຳພາ ຊີ້ນຳ ແລະ ກວດກາການຈັດຕັ້ງປະຕິບັດໜ້າທີ່ ຂອງອົງການໄອຍະການປະຊາຊົນພາກ ແລະ ອົງການໄອຍະການປະຊາຊົນ ນະຄອນຫຼວງ, ແຂວງ;

3. ໃຫ້ຄຳແນະນຳທາງດ້ານກົດໝາຍ ແກ່ອົງການໄອຍະການປະຊາຊົນ ນະຄອນຫຼວງ, ແຂວງ;

4. ລົບລ້າງຄຳສັ່ງ ຂອງຫົວໜ້າອົງການໄອຍະການປະຊາຊົນຂັ້ນລຸ່ມ ທີ່ບໍ່ຖືກຕ້ອງ ຕາມກົດໝາຍ;

5. ຖະແຫຼງ ເປັນຂັ້ນອຸທອນ ແລະ ຂັ້ນລົບລ້າງ ຕໍ່ສານປະຊາຊົນພາກ;

6. ສະເໜີຄັດຄ້ານ ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ແລະ ຄຳພິພາກສາ ຂອງສານປະຊາຊົນທ້ອງຖິ່ນ;

7. ລາຍງານສະພາບການເຄື່ອນໄຫວວຽກງານຂອງອົງການ ຕໍ່ຫົວໜ້າອົງການໄອຍະການປະຊາຊົນສູງສຸດ;

8. ຮຽກໂຮມ ແລະ ເປັນປະທານກອງປະຊຸມຄະນະກຳມະການໄອຍະການປະຊາຊົນພາກ;

9. ລາຍງານສະພາບການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານ ຂອງອົງການໄອຍະການປະຊາຊົນພາກ ຕໍ່ກອງປະຊຸມສະພາປະຊາຊົນຂັ້ນແຂວງ ຫຼື ຄະນະປະຈຳສະພາປະຊາຊົນຂັ້ນແຂວງທີ່ຕົນຕັ້ງຢູ່ໃນເວລາສະພາປະຊາຊົນຂັ້ນແຂວງ ບໍ່ໄດ້ເປີດກອງປະຊຸມ;

10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 35 (ປັບປຸງ) ຮອງຫົວໜ້າອົງການໄອຍະການປະຊາຊົນພາກ**

ຮອງຫົວໜ້າອົງການໄອຍະການປະຊາຊົນພາກ ມີໜ້າທີ່ຊ່ວຍ ຫົວໜ້າອົງການໄອຍະການປະຊາຊົນພາກ ໃນການປະຕິບັດໜ້າທີ່ ແລະ ຮັບຜິດຊອບວຽກງານໃດໜຶ່ງສະເພາະ ຕາມການມອບໝາຍຂອງຫົວໜ້າອົງການໄອຍະການປະຊາຊົນພາກ.

ໃນກໍລະນີ ຫົວໜ້າອົງການໄອຍະການປະຊາຊົນພາກ ຕິດຂັດ ແມ່ນ ຮອງຫົວໜ້າອົງການໄອຍະການປະຊາຊົນພາກ ທີ່ໄດ້ຮັບມອບໝາຍນັ້ນ ເປັນຜູ້ຮັກສາການແທນ.

**ມາດຕາ 36 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຫົວໜ້າອົງການໄອຍະການປະຊາຊົນ ນະຄອນຫຼວງ, ແຂວງ**

ຫົວໜ້າອົງການໄອຍະການປະຊາຊົນ ນະຄອນຫຼວງ, ແຂວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ນຳພາ ຊີ້ນຳ ການຕິດຕາມກວດກາການເຄົາລົບ ແລະ ປະຕິບັດກົດໝາຍ ຂອງ ອົງການສືບສວນ-ສອບສວນ, ສານປະຊາຊົນ ແລະ ອົງການປະຕິບັດຄຳຕັດສິນຂອງສານ;

2. ນຳພາ ຊີ້ນຳ ແລະ ກວດກາການຈັດຕັ້ງປະຕິບັດໜ້າທີ່ ຂອງອົງການໄອຍະການປະຊາຊົນຂັ້ນຂອງຕົນ, ອົງການໄອຍະການປະຊາຊົນ ເຂດ ແລະ ເມືອງ, ນະຄອນ ທີ່ໄດ້ຮັບການສ້າງຕັ້ງ;

3. ໃຫ້ຄຳແນະນຳທາງດ້ານກົດໝາຍ ແກ່ອົງການໄອຍະການປະຊາຊົນ ເຂດ ແລະ ເມືອງ, ນະຄອນ ທີ່ໄດ້ຮັບການສ້າງຕັ້ງ;

4. ລົບລ້າງຄຳສັ່ງ ຂອງຫົວໜ້າອົງການໄອຍະການປະຊາຊົນ ຂັ້ນລຸ່ມ ທີ່ບໍ່ຖືກຕ້ອງ ຕາມກົດໝາຍ;

5. ສັ່ງຟ້ອງຜູ້ຖືກຫາ ແລະ ຖະແຫຼງ ຕໍ່ສານປະຊາຊົນ ນະຄອນຫຼວງ, ແຂວງ;

6. ຖະແຫຼງເປັນຂັ້ນອຸທອນ ຕໍ່ສານປະຊາຊົນ ນະຄອນຫຼວງ, ແຂວງ;

7. ຖະແຫຼງ ຕໍ່ສານປະຊາຊົນ ນະຄອນຫຼວງ, ແຂວງ ກ່ຽວກັບການປ່ອຍຕົວນັກໂທດກ່ອນກຳນົດ ໂດຍມີເງື່ອນໄຂ;

8. ສະເໜີຄັດຄ້ານ ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ຂອງສານປະຊາຊົນຂັ້ນລຸ່ມ ແລະ ຄຳຕົກລົງ ຂອງສານປະຊາຊົນຂັ້ນຂອງຕົນ;

9. ຮຽກໂຮມ ແລະ ເປັນປະທານກອງປະຊຸມຄະນະກຳມະການໄອຍະການປະຊາຊົນ ນະຄອນຫຼວງ, ແຂວງ;

10. ລາຍງານສະພາບການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງອົງການໄອຍະການປະຊາຊົນ ນະຄອນຫຼວງ, ແຂວງ ຕໍ່ຫົວໜ້າ ອົງການໄອຍະການປະຊາຊົນພາກ ແລະ ອົງການໄອຍະການປະຊາຊົນສູງສຸດ;

11. ລາຍງານສະພາບການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານ ຂອງອົງການໄອຍະການປະຊາຊົນ ນະຄອນຫຼວງ, ແຂວງ ຕໍ່ກອງປະຊຸມສະພາປະຊາຊົນຂັ້ນແຂວງ ຫຼື ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ໃນເວລາສະພາປະຊາຊົນຂັ້ນແຂວງ ບໍ່ໄດ້ເປີດກອງປະຊຸມ;

12. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 37 (ປັບປຸງ) ຮອງຫົວໜ້າອົງການໄອຍະການປະຊາຊົນ ນະຄອນຫຼວງ, ແຂວງ**

ຮອງຫົວໜ້າອົງການໄອຍະການປະຊາຊົນ ນະຄອນຫຼວງ, ແຂວງ ມີໜ້າທີ່ຊ່ວຍ ຫົວໜ້າອົງການໄອຍະການປະຊາຊົນ ນະຄອນຫຼວງ, ແຂວງ ໃນການປະຕິບັດໜ້າທີ່ ແລະ ຮັບຜິດຊອບວຽກງານໃດໜຶ່ງສະເພາະ ຕາມການມອບໝາຍ ຂອງຫົວໜ້າອົງການໄອຍະການປະຊາຊົນ ນະຄອນຫຼວງ, ແຂວງ.

ໃນກໍລະນີ ຫົວໜ້າອົງການໄອຍະການປະຊາຊົນ ນະຄອນຫຼວງ, ແຂວງ ຕິດຂັດ ແມ່ນ ຮອງຫົວໜ້າອົງການໄອຍະການປະຊາຊົນ ນະຄອນຫຼວງ, ແຂວງ ທີ່ໄດ້ຮັບມອບໝາຍນັ້ນ ເປັນຜູ້ຮັກສາການແທນ.

**ມາດຕາ 38 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຫົວໜ້າອົງການໄອຍະການປະຊາຊົນ ເຂດ**

ຫົວໜ້າອົງການໄອຍະການປະຊາຊົນ ເຂດ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ນຳພາ ຊີ້ນຳ ການຕິດຕາມກວດກາການເຄົາລົບ ແລະ ປະຕິບັດກົດໝາຍ ຂອງ ອົງການສືບສວນ-ສອບສວນ, ສານປະຊາຊົນ ແລະ ອົງການປະຕິບັດຄຳຕັດສິນຂອງສານ;

2. ນຳພາ ຊີ້ນຳ ແລະ ກວດກາການຈັດຕັ້ງປະຕິບັດໜ້າທີ່ ຂອງອົງການໄອຍະການປະຊາຊົນຂັ້ນຂອງຕົນ;

3. ສັ່ງຟ້ອງຜູ້ຖືກຫາ ແລະ ຖະແຫຼງ ຕໍ່ສານປະຊາຊົນຂັ້ນຂອງຕົນ;

4. ສະເໜີ ຄັດຄ້ານ ຄຳຕັດສິນ ຂອງສານປະຊາຊົນຂັ້ນຂອງຕົນ;

5. ລາຍງານ ສະພາບການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງອົງການໄອຍະການປະຊາຊົນ ເຂດ ຕໍ່ຫົວໜ້າອົງການໄອຍະການປະຊາຊົນ ນະຄອນຫຼວງ, ແຂວງ;

6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 39 (ປັບປຸງ) ຮອງຫົວໜ້າອົງການໄອຍະການປະຊາຊົນເຂດ**

ຮອງຫົວໜ້າອົງການໄອຍະການປະຊາຊົນເຂດ ມີໜ້າທີ່ຊ່ວຍ ຫົວໜ້າອົງການໄອຍະການປະຊາຊົນເຂດ ແລະ ຮັບຜິດຊອບວຽກງານໃດໜຶ່ງສະເພາະ ຕາມການມອບໝາຍ ຂອງຫົວໜ້າອົງການໄອຍະການປະຊາຊົນເຂດ.

ໃນກໍລະນີ ຫົວໜ້າອົງການໄອຍະການປະຊາຊົນເຂດ ຕິດຂັດ ແມ່ນ ຮອງຫົວໜ້າອົງການໄອຍະການປະຊາຊົນເຂດ ທີ່ໄດ້ຮັບມອບໝາຍນັ້ນ ເປັນຜູ້ຮັກສາການແທນ.

**ມາດຕາ 40 (ປັບປຸງ) ສິດ ແລະ ໜ້າທີ່ ຂອງພະນັກງານໄອຍະການປະຊາຊົນ**

ພະນັກງານໄອຍະການປະຊາຊົນ ມີ ສິດ ແລະ ໜ້າທີ່ ຕາມການມອບໝາຍ ຂອງຫົວໜ້າອົງການໄອຍະການປະຊາຊົນ ດັ່ງນີ້:

1. ຕິດຕາມກວດກາການເຄົາລົບ ແລະ ປະຕິບັດກົດໝາຍ ຂອງ ອົງການສືບສວນ-ສອບສວນ, ສານປະຊາຊົນ ແລະ ອົງການປະຕິບັດຄຳຕັດສິນຂອງສານ;

2. ດຳເນີນການສືບສວນ-ສອບສວນຄະດີ;

3. ເອົາຄຳໃຫ້ການຂອງຜູ້ເຂົ້າຮ່ວມໃນການດຳເນີນຄະດີ;

4. ເກັບກຳຂໍ້ມູນຫຼັກຖານ ກ່ຽວກັບຄະດີ;

5. ເຂົ້າຮ່ວມການດຳເນີນຄະດີກັບເຈົ້າໜ້າທີ່ສືບສວນ-ສອບສວນ;

6. ອອກ ໝາຍຮຽກ, ໝາຍເຊີນ;

7. ຄົ້ນຄວ້າ ສະຫຼຸບສຳນວນຄະດີ, ຮ່າງຄຳຖະແຫຼງ ຫຼື ຄຳຕິກລົງ;

8. ເຂົ້າຮ່ວມ ແລະ ຖະແຫຼງ ໃນທີ່ປະຊຸມສານ;

9. ຕິດຕາມກວດກາການປະຕິບັດ ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ແລະ ຄຳພິພາກສາ ຂອງສານທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ;

10. ຕິດຕາມກວດກາສະຖານທີ່ກັກຕົວ, ສະຖານທີ່ກັກຂັງ, ຄ້າຍດັດສ້າງ, ຄ້າຍຄຸມຂັງ ແລະ ສະຖານທີ່ປະຕິບັດມາດຕະການບັງຄັບອື່ນຂອງສານ;

11. ໄດ້ຮັບການຍົກລະດັບ ກ່ຽວກັບທິດສະດີການເມືອງ-ການປົກຄອງ ແລະ ວຽກງານໄອຍະການປະຊາຊົນ;

12. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 41 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຜູ້ຊ່ວຍພະນັກງານໄອຍະການປະຊາຊົນ**

ຜູ້ຊ່ວຍພະນັກງານໄອຍະການປະຊາຊົນ ມີ ສິດ ແລະ ໜ້າທີ່ ຕາມການມອບໝາຍຂອງພະນັກງານໄອຍະການປະຊາຊົນ ດັ່ງນີ້:

1. ເຂົ້າຮ່ວມໃນການດຳເນີນຄະດີ;
2. ເຂົ້າຮ່ວມ ແລະ ບັນທຶກເອົາຄຳໃຫ້ການ ຂອງຜູ້ເຂົ້າຮ່ວມໃນການດຳເນີນຄະດີ;
3. ຊ່ວຍຄົ້ນຄວ້າ, ສະຫຼຸບສຳນວນຄະດີ, ຮ່າງຄຳຖະແຫຼງ ຫຼື ຄຳຕົກລົງ;
4. ໃສ່ເລກທີຄະດີ, ຈັດສຳນວນຄະດີ ແລະ ເຮັດບັນຊີເອກະສານ, ເກັບມ້ຽນ ແລະ ເຮັດສະຖິຕິຄະດີ;
5. ຂຶ້ນບັນຊີ ແລະ ຕິດຕາມການເກັບມ້ຽນຂອງກາງຄະດີ;
6. ຂຶ້ນບັນຊີ ແລະ ສະຖິຕິ ຜູ້ຖືກຫາ, ຜູ້ຖືກດັດສ້າງ, ນັກໂທດ;
7. ເຮັດໝາຍຮຽກ, ໝາຍເຊີນ;
8. ໄດ້ຮັບການຍົກລະດັບ ກ່ຽວກັບທິດສະດີການເມືອງ-ການປົກຄອງ ແລະ ວຽກງານໄອຍະການປະຊາຊົນ;
9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ພາກທີ V
## ການສັ່ງຟ້ອງຜູ້ຖືກຫາຂຶ້ນສານ ຂອງອົງການໄອຍະການປະຊາຊົນ

**ມາດຕາ 42 (ໃໝ່) ການສັ່ງຟ້ອງຜູ້ຖືກຫາຂຶ້ນສານ ຂອງອົງການໄອຍະການປະຊາຊົນ**

ການສັ່ງຟ້ອງຜູ້ຖືກຫາຂຶ້ນສານ ຂອງອົງການໄອຍະການປະຊາຊົນ ແມ່ນ ການອອກຄຳສັ່ງ ໂດຍຫົວໜ້າອົງການໄອຍະການປະຊາຊົນ ກ່ຽວກັບຄະດີອາຍາ ເພື່ອໃຫ້ສານ ພິຈາລະນາ ຕາມກົດໝາຍ.

ມີແຕ່ອົງການໄອຍະການປະຊາຊົນເທົ່ານັ້ນ ມີສິດ ສັ່ງຟ້ອງຜູ້ຖືກຫາຂຶ້ນສານ.

ການສັ່ງຟ້ອງຜູ້ຖືກຫາຂຶ້ນສານ ຂອງອົງການໄອຍະການປະຊາຊົນ ມີ ກໍລະນີ ດັ່ງນີ້:

1. ການສັ່ງຟ້ອງຜູ້ຖືກຫາຂຶ້ນສານ;
2. ການສັ່ງຟ້ອງຜູ້ຖືກຫາຂຶ້ນສານໂດຍກົງ.

**ມາດຕາ 43 (ປັບປຸງ) ການສັ່ງຟ້ອງຜູ້ຖືກຫາຂຶ້ນສານ**

ການສັ່ງຟ້ອງຜູ້ຖືກຫາຂຶ້ນສານ ແມ່ນ ການອອກຄຳສັ່ງຂອງຫົວໜ້າອົງການໄອຍະການປະຊາຊົນ ຊຶ່ງຕັ້ງຂໍ້ກ່າວຫາໃສ່ຜູ້ຖືກຫາ ພ້ອມທັງ ສົ່ງສຳນວນຄະດີ, ຜູ້ຖືກຫາ ແລະ ຂອງກາງ ໃຫ້ສານພິຈາລະນາຕັດສິນຕາມກົດໝາຍ.

ສຳລັບຂັ້ນຕອນການສັ່ງຟ້ອງຜູ້ຖືກຫາຂຶ້ນສານ ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການດຳເນີນຄະດີອາຍາ.

**ມາດຕາ 44 (ໃໝ່) ການສັ່ງຟ້ອງຜູ້ຖືກຫາຂຶ້ນສານໂດຍກົງ**

ການສັ່ງຟ້ອງຜູ້ຖືກຫາຂຶ້ນສານໂດຍກົງ ແມ່ນ ຫົວໜ້າອົງການໄອຍະການປະຊາຊົນ ຫຼື ພະນັກງານໄອຍະການປະຊາຊົນ ສັ່ງຟ້ອງຜູ້ຖືກຫາຂຶ້ນສານ ໂດຍບໍ່ຕ້ອງເປີດການສືບສວນ-ສອບສວນ.

ເງື່ອນໄຂ ແລະ ຂັ້ນຕອນ ການສັ່ງຟ້ອງຜູ້ຖືກຫາຂຶ້ນສານໂດຍກົງ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍການດຳເນີນຄະດີອາຍາ.

**ມາດຕາ 45 (ປັບປຸງ) ການສັ່ງຟ້ອງ ແລະ ການຖະແຫຼງຕໍ່ສານ**

ກ່ອນຈະທຳການສັ່ງຟ້ອງຜູ້ຖືກຫາ ແລະ ການຖະແຫຼງຕໍ່ສານນັ້ນ ອົງການໄອຍະການປະຊາຊົນ ຕ້ອງຄົ້ນຄວ້າສຳນວນຄະດີຢ່າງຮອບດ້ານ, ຄົບຖ້ວນ ແລະ ພາວະວິໄສ, ຮັບປະກັນໃຫ້ມີຫຼັກຖານຮັດກຸມ ແລະ ໜັກແໜ້ນ ເພື່ອຢັ້ງຢືນຄຳສັ່ງຟ້ອງ ແລະ ຄຳຖະແຫຼງຂອງຕົນ ຕໍ່ສານປະຊາຊົນ.

ຄຳສັ່ງຟ້ອງຂອງອົງການໄອຍະການປະຊາຊົນ ຕ້ອງແຈ້ງໃຫ້ຜູ້ຖືກຫາ ຢ່າງໜ້ອຍພາຍໃນເວລາ ສາມວັນລັດຖະການ ກ່ອນສົ່ງສຳນວນຄະດີໃຫ້ສານປະຊາຊົນພິຈາລະນາ.

## ພາກທີ VI
## ການຕິດຕາມກວດກາການປະຕິບັດກົດໝາຍ

**ມາດຕາ 46 (ປັບປຸງ) ການຕິດຕາມກວດກາການປະຕິບັດກົດໝາຍ**

ການຕິດຕາມກວດກາການປະຕິບັດກົດໝາຍ ແມ່ນ ການຕິດຕາມກວດກາ ຂອງອົງການໄອຍະການປະຊາຊົນ ກ່ຽວກັບການປະຕິບັດກົດໝາຍ ຂອງ ອົງການສືບສວນ-ສອບສວນ, ສານປະຊາຊົນ ແລະ ອົງການປະຕິບັດຄຳຕັດສິນຂອງສານ ໃນການດຳເນີນຄະດີຕາມຂະບວນຍຸຕິທຳ.

**ມາດຕາ 47 (ໃໝ່) ປະເພດການຕິດຕາມກວດກາການປະຕິບັດກົດໝາຍ**

ປະເພດການຕິດຕາມກວດກາການປະຕິບັດກົດໝາຍ ມີ ດັ່ງນີ້:

1. ການຕິດຕາມກວດກາການປະຕິບັດກົດໝາຍຂອງອົງການສືບສວນ-ສອບສວນ;
2. ການຕິດຕາມກວດກາການປະຕິບັດກົດໝາຍຂອງສານ ໃນການດຳເນີນຄະດີ;
3. ການຕິດຕາມກວດກາການປະຕິບັດຄຳຕັດສິນຂອງສານ;
4. ການຕິດຕາມກວດກາການປະຕິບັດກົດໝາຍ ໃນສະຖານທີ່ກັກຕົວ, ສະຖານທີ່ກັກຂັງ, ຄ້າຍດັດສ້າງ, ຄ້າຍຄຸມຂັງ ແລະ ສະຖານທີ່ປະຕິບັດມາດຕະການບັງຄັບອື່ນຂອງສານ.

## ໝວດທີ 1
## ການຕິດຕາມກວດກາການປະຕິບັດກົດໝາຍຂອງອົງການສືບສວນ-ສອບສວນ

**ມາດຕາ 48 (ປັບປຸງ) ການຕິດຕາມກວດກາການປະຕິບັດກົດໝາຍຂອງອົງການສືບສວນ-ສອບສວນ**

ການຕິດຕາມກວດກາການປະຕິບັດກົດໝາຍຂອງອົງການສືບສວນ-ສອບສວນ ແມ່ນ ການຕິດຕາມກວດກາການປະຕິບັດກົດໝາຍ ໃນຂັ້ນຕອນການສືບສວນ-ສອບສວນ ໃຫ້ຖືກຕ້ອງ, ຮອບດ້ານ, ຄົບຖ້ວນ ແລະ ພາວະວິໄສ ເພື່ອ:

1. ຊອກໃຫ້ເຫັນການປະຕິບັດ ກົດໝາຍ, ລະບຽບການ ຂອງອົງການສືບສວນ-ສອບສວນ ມີຄວາມຖືກຕ້ອງ ຫຼື ມີການລະເມີດກົດໝາຍ;

2. ຊອກຮູ້ການນຳໃຊ້ວິທີການສືບສວນ-ສອບສວນ ແລະ ມາດຕະການສະກັດກັ້ນ ຫຼື ມີການລະເມີດກົດໝາຍ ເຊັ່ນ ການກວດຄົ້ນເຄຫະສະຖານ, ການກັກຕົວ, ການຈັບຕົວ, ການກັກຂັງພາງ ການປ່ອຍຕົວພາງຜູ້ຖືກຫາ ໄດ້ປະຕິບັດຖືກຕ້ອງຕາມກົດໝາຍ ຫຼື ມີການລະເມີດກົດໝາຍ, ໃນກໍລະນີມີການລະເມີດກົດໝາຍ ອົງການໄອຍະການປະຊາຊົນ ຕ້ອງອອກຄຳສັ່ງໃຫ້ພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດ ແລະ ແກ້ໄຂ ໃຫ້ຖືກຕ້ອງຕາມກົດໝາຍ;

3. ໃຫ້ອົງການສືບສວນ-ສອບສວນປະຕິບັດກົດໝາຍ ກ່ຽວກັບການດຳເນີນຄະດີອາຍາ ຢ່າງເຂັ້ມງວດ;

4. ໃຫ້ການອອກ ຫຼື ບໍ່ອອກ ຄຳສັ່ງເປີດການສືບສວນ-ສອບສວນ ຂອງຫົວໜ້າອົງການສືບສວນ-ສອບສວນ ມີ ຫຼື ບໍ່ມີ ຫຼັກຖານໜັກແໜ້ນ ແລະ ຖືກຕ້ອງຕາມກົດໝາຍ;

5. ຄົ້ນຄວ້າ, ຊອກໃຫ້ເຫັນທຸກການກະທຳຜິດທີ່ເກີດຂຶ້ນ ແລະ ບໍ່ໃຫ້ຜູ້ກະທຳຜິດພົ້ນຈາກການລົງໂທດຕາມກົດໝາຍ;

6. ຊອກໃຫ້ເຫັນ ສາເຫດ ແລະ ເງື່ອນໄຂ ຂອງການກະທຳຜິດ ເພື່ອວາງມາດຕະການແກ້ໄຂ.

**ມາດຕາ 49 ສິດ ແລະ ໜ້າທີ່ ຂອງອົງການໄອຍະການປະຊາຊົນໃນການຕິດຕາມກວດກາການປະຕິບັດກົດໝາຍຂອງອົງການສືບສວນ-ສອບສວນ**

ໃນການຕິດຕາມກວດກາການປະຕິບັດກົດໝາຍຂອງອົງການສືບສວນ-ສອບສວນ ອົງການໄອຍະການປະຊາຊົນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ທວງເອົາສຳນວນຄະດີອາຍາ, ເອກະສານ, ຂອງກາງ ແລະ ຂໍ້ມູນຕ່າງໆ ກ່ຽວກັບການກະທຳຜິດຈາກອົງການສືບສວນ-ສອບສວນ;

2. ເຂົ້າຮ່ວມການສືບສວນ-ສອບສວນຄະດີອາຍາ ຫຼື ດຳເນີນການສືບສວນ-ສອບສວນ ດ້ວຍຕົນເອງໃນກໍລະນີຈຳເປັນ;

3. ລົບລ້າງຄຳສັ່ງ ຂອງອົງການສືບສວນ-ສອບສວນ ທີ່ບໍ່ຖືກຕ້ອງຕາມກົດໝາຍ ຫຼື ບໍ່ມີເຫດຜົນ;

4. ໃຫ້ຄຳແນະນຳ ເປັນລາຍລັກອັກສອນ ກ່ຽວກັບການປະຕິບັດວິທີການສືບສວນ-ສອບສວນ, ມາດຕະການສະກັດກັ້ນ, ການຊອກຫາຜູ້ກະທຳຜິດ ແລະ ການຈຳແນກການກະທຳຜິດ;

5. ອອກຄຳສັ່ງຕ່າງໆ ເປັນຕົ້ນ ຄຳສັ່ງກັກຕົວຜູ້ຖືກສົງໄສ, ຄຳສັ່ງ ຈັບຕົວ, ກັກຂັງພາງ, ປ່ອຍຕົວພາງຜູ້ຖືກຫາ, ກວດຄົ້ນເຄຫະສະຖານ ກ່ຽວກັບການກະທຳຜິດ ທີ່ບໍ່ເຊິ່ງໜ້າ ຫຼື ໃນກໍລະນີບໍ່ຮີບດ່ວນ;

6. ຕໍ່ກຳນົດເວລາສືບສວນ-ສອບສວນ ແລະ ກຳນົດເວລາກັກຂັງພາງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ;

7. ສົ່ງສຳນວນຄະດີຄືນໃຫ້ອົງການສືບສວນ-ສອບສວນ ພ້ອມດ້ວຍຄຳແນະນຳ ກ່ຽວກັບການສືບສວນ-ສອບສວນເພີ່ມເຕີມ;

8. ອອກຄຳສັ່ງໃຫ້ຫົວໜ້າອົງການສືບສວນ-ສອບສວນ ເພື່ອສັ່ງໃຫ້ເຈົ້າໜ້າທີ່ສືບສວນ-ສອບສວນ ທີ່ໄດ້ລະເມີດກົດໝາຍໃນການດຳເນີນຄະດີຢຸດເຊົາການສືບສວນ-ສອບສວນ;

9. ອອກຄຳສັ່ງ ເປີດການສືບສວນ-ສອບສວນ, ຊັດມ້ຽນຄະດີ ຫຼື ໂຈະການດຳເນີນຄະດີ;

10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 50 ຜົນບັງຄັບໃນການປະຕິບັດນິຕິກຳຂອງອົງການໄອຍະການປະຊາຊົນຕໍ່ອົງການສືບສວນ-ສອບສວນ**

ທຸກຄຳສັ່ງ ແລະ ຄຳແນະນຳ ຂອງຫົວໜ້າອົງການໄອຍະການປະຊາຊົນ ມີຜົນບັງຄັບປະຕິບັດ ສຳລັບອົງການສືບສວນ-ສອບສວນ.

## ໝວດທີ 2
## ການຕິດຕາມກວດກາການປະຕິບັດກົດໝາຍຂອງສານ ໃນການດຳເນີນຄະດີ

**ມາດຕາ 51 (ປັບປຸງ) ການຕິດຕາມກວດກາການປະຕິບັດກົດໝາຍຂອງສານ ໃນການດຳເນີນຄະດີ**

ອົງການໄອຍະການປະຊາຊົນ ຕິດຕາມກວດກາການປະຕິບັດກົດໝາຍຂອງສານ ໃນການດຳເນີນຄະດີໃຫ້ຮອບດ້ານ, ຄົບຖ້ວນ, ພາວະວິໄສ ແລະ ຖືກຕ້ອງ ຕາມຂັ້ນຕອນການດຳເນີນຄະດີ ເພື່ອໃຫ້ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ຫຼື ຄຳພິພາກສາ ຂອງສານ ຖືກຕ້ອງ ແລະ ຍຸຕິທຳ.

ໃນການຕິດຕາມກວດກາ ການປະຕິບັດກົດໝາຍຂອງສານ ໃນການດຳເນີນຄະດີນັ້ນ ອົງການໄອຍະການປະຊາຊົນ ຕິດຕາມກວດກາ ການດຳເນີນຄະດີ ອາຍາ, ແພ່ງ, ການຄ້າ, ຄອບຄົວ, ເດັກ, ແຮງງານ, ປົກຄອງ ແລະ ຄະດີອື່ນ ຕາມກົດໝາຍ.

ໃນກໍລະນີ ການຕິດຕາມກວດກາການປະຕິບັດກົດໝາຍຂອງສານ ຫາກເຫັນວ່າມີການລະເມີດຫຼັກການຂອງການດຳເນີນຄະດີ ພະນັກງານໄອຍະການປະຊາຊົນ ຕ້ອງສະເໜີຄະນະສານພິຈາລະນາໃຫ້ຖືກຕ້ອງ.

**ມາດຕາ 52 (ໃໝ່) ການຕິດຕາມກວດກາການປະຕິບັດກົດໝາຍຂອງສານ ໃນການດຳເນີນຄະດີອາຍາ**

ອົງການໄອຍະການປະຊາຊົນ ຕິດຕາມກວດກາການປະຕິບັດກົດໝາຍຂອງສານ ໃນການດຳເນີນຄະດີອາຍາ ເພື່ອຮັບປະກັນໃຫ້ການດຳເນີນຄະດີ ຮອບດ້ານ, ຄົບຖ້ວນ, ພາວະວິໄສ ແລະ ຖືກຕ້ອງຕາມຂັ້ນຕອນການດຳເນີນຄະດີ ເຮັດໃຫ້ ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ຫຼື ຄຳພິພາກສາ ຂອງສານຖືກຕ້ອງ ແລະ ຍຸຕິທຳ.

**ມາດຕາ 53 (ປັບປຸງ) ສິດ ແລະ ໜ້າທີ່ ຂອງອົງການໄອຍະການປະຊາຊົນ ໃນການຕິດຕາມກວດກາການປະຕິບັດກົດໝາຍຂອງສານ ໃນການດຳເນີນຄະດີອາຍາ**

ໃນການຕິດຕາມກວດກາການປະຕິບັດກົດໝາຍຂອງສານ ໃນການດຳເນີນຄະດີອາຍານັ້ນ ອົງການໄອຍະການປະຊາຊົນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ເຂົ້າຮ່ວມໃນການດຳເນີນຄະດີອາຍາ ຢູ່ສານປະຊາຊົນຂັ້ນຂອງຕົນ ເພື່ອກ່າວຟ້ອງ, ຖະແຫຼງຕໍ່ສານ ແລະ ການໄຕ່ສວນໃນທີ່ປະຊຸມສານ;
2. ກວດກາ ຄຳຕັດສິນ ຫຼື ຄຳພິພາກສາຂອງສານ ຖືກຕ້ອງ ຫຼື ບໍ່ຖືກຕ້ອງ ຕາມການສັ່ງຟ້ອງຂອງຕົນ ລວມທັງການວາງໂທດ ແລະ ການນຳໃຊ້ມາດຕາກົດໝາຍໃສ່ການກະທຳຜິດນັ້ນ;
3. ສະເໜີຄັດຄ້ານ ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ, ຄຳພິພາກສາ ຄະດີອາຍາ ທີ່ຍັງບໍ່ທັນໃຊ້ໄດ້ຢ່າງເດັດຂາດ ຂອງສານປະຊາຊົນຂັ້ນລຸ່ມ ແລະ ຂັ້ນຂອງຕົນ ທີ່ເຫັນວ່າ ບໍ່ມີເຫດຜົນ ຫຼື ບໍ່ຖືກຕ້ອງຕາມກົດໝາຍ;
4. ຖອນຄຳສະເໜີຄັດຄ້ານຂອງຕົນ ກ່ອນສານຕັດສິນ;
5. ສະເໜີຮື້ຟື້ນຄະດີ ຕາມກົດໝາຍ;
6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 54 (ໃໝ່) ການຕິດຕາມກວດກາການປະຕິບັດກົດໝາຍຂອງສານ ໃນການດຳເນີນຄະດີ ແພ່ງ, ການຄ້າ, ຄອບຄົວ, ເດັກ, ແຮງງານ ແລະ ຄະດີອື່ນໃນສາຍພົວພັນທາງແພ່ງ**

ອົງການໄອຍະການປະຊາຊົນ ຕິດຕາມກວດກາການປະຕິບັດກົດໝາຍຂອງສານ ໃນການດຳເນີນຄະດີ ແພ່ງ, ການຄ້າ, ຄອບຄົວ, ເດັກ, ແຮງງານ ແລະ ຄະດີອື່ນໃນສາຍພົວພັນທາງແພ່ງ ເພື່ອປົກປ້ອງຜົນປະໂຫຍດຂອງລັດ, ສັງຄົມ ແລະ ລວມໝູ່, ສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງເດັກ ແລະ ບຸກຄົນອື່ນ ທີ່ບໍ່ມີຄວາມສາມາດທາງດ້ານການປະພຶດ ໂດຍໜ້າທີ່ ຕາມກົດໝາຍ.

**ມາດຕາ 55 (ປັບປຸງ) ສິດ ແລະ ໜ້າທີ່ ຂອງອົງການໄອຍະການປະຊາຊົນ ໃນການຕິດຕາມກວດກາການປະຕິບັດກົດໝາຍຂອງສານ ກ່ຽວກັບການດຳເນີນຄະດີ ແພ່ງ, ການຄ້າ, ຄອບຄົວ, ເດັກ, ແຮງງານ ແລະ ຄະດີອື່ນໃນສາຍພົວພັນທາງແພ່ງ**

ໃນການຕິດຕາມກວດກາການປະຕິບັດກົດໝາຍຂອງສານ ກ່ຽວກັບການດຳເນີນຄະດີ ແພ່ງ, ການຄ້າ, ຄອບຄົວ, ເດັກ, ແຮງງານ ແລະ ຄະດີອື່ນໃນສາຍພົວພັນທາງແພ່ງນັ້ນ ອົງການໄອຍະການປະຊາຊົນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

**ກ. ໃນກໍລະນີ ບໍ່ມີຜູ້ຮ້ອງຟ້ອງ:**

1. ເປັນຜູ້ຕາງໜ້າໂຈດ;
2. ປະກອບຫຼັກຖານໃນຄະດີ ແລະ ທຳການຮ້ອງຟ້ອງ ຕໍ່ສານປະຊາຊົນ;
3. ເຮັດຄຳຖະແຫຼງ ເປັນລາຍລັກອັກສອນ;
4. ເຂົ້າຮ່ວມປະຊຸມສານຂັ້ນຂອງຕົນ ເພື່ອຖະແຫຼງ;
5. ສະເໜີຄັດຄ້ານ ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ, ຄຳພິພາກສາ ຄະດີ ແພ່ງ, ການຄ້າ, ຄອບຄົວ, ເດັກ, ແຮງງານ ແລະ ຄະດີອື່ນໃນສາຍພົວພັນທາງແພ່ງ ທີ່ຍັງບໍ່ທັນໃຊ້ໄດ້ຢ່າງເດັດຂາດ ຂອງສານປະຊາຊົນຂັ້ນລຸ່ມ ແລະ ຂັ້ນຂອງຕົນ ທີ່ເຫັນວ່າ ບໍ່ມີເຫດຜົນ ຫຼື ບໍ່ຖືກຕ້ອງ ຕາມກົດໝາຍ;
6. ສະເໜີຮື້ຟື້ນຄະດີ;
7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ຂ. ໃນກໍລະນີ ມີຜູ້ຮ້ອງຟ້ອງ ຫຼື ໂຈດ:**

1. ຄົ້ນຄວ້າສຳນວນຄະດີ ແລະ ຖະແຫຼງເປັນລາຍລັກອັກສອນ ຕໍ່ສານປະຊາຊົນ;
2. ເຂົ້າຮ່ວມປະຊຸມສານຂັ້ນຂອງຕົນ ເພື່ອຖະແຫຼງ;
3. ສະເໜີຄັດຄ້ານ ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ, ຄຳພິພາກສາ ຄະດີ ແພ່ງ, ການຄ້າ, ຄອບຄົວ, ເດັກ, ແຮງງານ ແລະ ຄະດີອື່ນໃນສາຍພົວພັນທາງແພ່ງ ທີ່ຍັງບໍ່ທັນໃຊ້ໄດ້ຢ່າງເດັດຂາດ ຂອງສານປະຊາຊົນຂັ້ນລຸ່ມ ແລະ ຂັ້ນຂອງຕົນ ທີ່ເຫັນວ່າ ບໍ່ມີເຫດຜົນ ຫຼື ບໍ່ຖືກຕ້ອງ ຕາມກົດໝາຍ;
4. ສະເໜີຮື້ຟື້ນຄະດີ;
5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 56 (ປັບປຸງ) ວິທີການດຳເນີນການຕິດຕາມກວດກາການປະຕິບັດກົດໝາຍຂອງສານໃນການດຳເນີນຄະດີ ແພ່ງ, ການຄ້າ, ຄອບຄົວ, ເດັກ, ແຮງງານ ແລະ ຄະດີອື່ນໃນສາຍພົວພັນທາງແພ່ງ**

ການຕິດຕາມກວດກາການປະຕິບັດກົດໝາຍຂອງສານ ໃນການດຳເນີນຄະດີ ແພ່ງ, ການຄ້າ, ຄອບຄົວ, ເດັກ, ແຮງງານ ແລະ ຄະດີອື່ນໃນສາຍພົວພັນທາງແພ່ງນັ້ນ ໃຫ້ດຳເນີນຕາມວິທີການ ດັ່ງນີ້:

1. ຄົ້ນຄວ້າ, ປະກອບຫຼັກຖານໃນຄະດີ ແລະ ທຳການຮ້ອງຟ້ອງ ຕໍ່ສານປະຊາຊົນ;
2. ຄົ້ນຄວ້າ ບົດສະຫຼຸບ ຫຼື ສຳນວນຄະດີ ທີ່ສານປະຊາຊົນ ສົ່ງໃຫ້;
3. ເຮັດຄຳຖະແຫຼງເປັນລາຍລັກອັກສອນ;
4. ເຂົ້າຮ່ວມປະຊຸມສານຂັ້ນຂອງຕົນ ເພື່ອຖະແຫຼງຕໍ່ສານ;
5. ສະເໜີຄັດຄ້ານ ຄຳຊີ້ຂາດ, ຄຳຕັດສິນ, ຄຳພິພາກສາ ຄະດີ ແພ່ງ, ການຄ້າ, ຄອບຄົວ, ເດັກ, ແຮງງານ ແລະ ຄະດີອື່ນໃນສາຍພົວພັນທາງແພ່ງນັ້ນ ທີ່ຍັງບໍ່ທັນໃຊ້ໄດ້ຢ່າງເດັດຂາດ ຂອງສານປະຊາຊົນຂັ້ນລຸ່ມ ແລະ ຂັ້ນຂອງຕົນ ທີ່ເຫັນວ່າ ບໍ່ມີເຫດຜົນ ຫຼື ບໍ່ຖືກຕ້ອງ ຕາມກົດໝາຍ;
6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 57 (ໃໝ່) ການຕິດຕາມກວດກາການປະຕິບັດກົດໝາຍຂອງສານ ໃນການດຳເນີນຄະດີປົກຄອງ**

ອົງການໄອຍະການປະຊາຊົນ ຕິດຕາມກວດກາການປະຕິບັດກົດໝາຍຂອງສານ ໃນການດຳເນີນຄະດີປົກຄອງ ເພື່ອປົກປ້ອງຜົນປະໂຫຍດຂອງລັດ, ຮັບປະກັນໃຫ້ການດຳເນີນຄະດີ ຮອບດ້ານ, ຄົບຖ້ວນ, ພາວະວິໄສ ແລະ ຖືກຕ້ອງ ຕາມຂັ້ນຕອນຂອງການດຳເນີນຄະດີ ເຮັດໃຫ້ ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ຫຼື ຄຳພິພາກສາ ຂອງສານ ຖືກຕ້ອງ ແລະ ຍຸຕິທຳ.

**ມາດຕາ 58 (ໃໝ່) ສິດ ແລະ ໜ້າທີ່ ຂອງອົງການໄອຍະການປະຊາຊົນ ໃນການຕິດຕາມກວດກາການປະຕິບັດກົດໝາຍຂອງສານ ໃນການດຳເນີນຄະດີປົກຄອງ**

ໃນການຕິດຕາມກວດກາການປະຕິບັດກົດໝາຍຂອງສານ ໃນການດຳເນີນຄະດີປົກຄອງ ອົງການໄອຍະການປະຊາຊົນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ເປັນຜູ້ຕາງໜ້າລັດ;
2. ຄົ້ນຄວ້າ ບົດສະຫຼຸບ ຫຼື ສຳນວນຄະດີ ທີ່ ຄະນະສານປົກຄອງ ສົ່ງໃຫ້;
3. ເຮັດຄຳຖະແຫຼງ ເປັນລາຍລັກອັກສອນ;
4. ເຂົ້າຮ່ວມປະຊຸມສານຂັ້ນຂອງຕົນ ເພື່ອຖະແຫຼງ;
5. ສະເໜີຄັດຄ້ານ ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ, ຄຳພິພາກສາ ຄະດີປົກຄອງ ທີ່ຍັງບໍ່ທັນໃຊ້ໄດ້ຢ່າງເດັດຂາດ ຂອງສານປະຊາຊົນຂັ້ນລຸ່ມ ແລະ ຂັ້ນຂອງຕົນ ທີ່ເຫັນວ່າ ບໍ່ຖືກຕ້ອງຕາມເຫດການຕົວຈິງ ຫຼື ບໍ່ຖືກຕ້ອງຕາມກົດໝາຍ;
6. ສະເໜີຮື້ຟື້ນຄະດີ;
7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ໝວດທີ 3
## ການຕິດຕາມກວດກາການປະຕິບັດຄຳຕັດສິນຂອງສານ

**ມາດຕາ 59 ການຕິດຕາມກວດກາການປະຕິບັດຄຳຕັດສິນຂອງສານ**

ການຕິດຕາມກວດກາການປະຕິບັດຄຳຕັດສິນຂອງສານ ແມ່ນ ການຕິດຕາມກວດກາການປະຕິບັດ ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ຫຼື ຄຳພິພາກສາຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດ ເພື່ອໃຫ້ໄດ້ຮັບການປະຕິບັດຢ່າງຖືກຕ້ອງ ແລະ ຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 60 (ປັບປຸງ) ສິດ ແລະ ໜ້າທີ່ ຂອງອົງການໄອຍະການປະຊາຊົນ ໃນການຕິດຕາມກວດກາການປະຕິບັດຄຳຕັດສິນຂອງສານ**

ໃນການຕິດຕາມກວດກາການປະຕິບັດຄຳຕັດສິນຂອງສານ ອົງການໄອຍະການປະຊາຊົນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ໄດ້ຮັບສຳເນົາຄຳສັ່ງ ໃຫ້ປະຕິບັດ ຄຳຕັດສິນ ຫຼື ຄຳພິພາກສາຂອງສານ;
2. ສະເໜີໃຫ້ອົງການປະຕິບັດຄຳຕັດສິນຂອງສານທີ່ກ່ຽວຂ້ອງ:
   2.1. ລາຍງານສະພາບການປະຕິບັດ ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ຫຼື ຄຳພິພາກສາຂອງສານ;
   2.2. ປະຕິບັດ ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ຫຼື ຄຳພິພາກສາຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ ຊຶ່ງຍັງບໍ່ທັນໄດ້ຮັບການປະຕິບັດ;
3. ກວດກາຄວາມຖືກຕ້ອງຂອງການປະຕິບັດຄຳຕັດສິນຂອງສານ ເປັນຕົ້ນ ການປະຕິບັດກົດໝາຍ, ການຊຳລະທາງແພ່ງ, ການເກັບ ແລະ ການມອບ ຄ່າທຳນຽມສານ, ຄ່າທຳນຽມຂອງຜູ້ເສຍຄະດີ ແລະ ຄ່າປັບໃໝເຂົ້າງົບປະມານ, ການຮິບຊັບ ແລະ ການຮິບວັດຖຸສິ່ງຂອງ ເຂົ້າເປັນຂອງລັດ, ການປະຕິບັດໂທດທາງອາຍາ, ການປິດການປະຕິບັດຄຳຕັດສິນຂອງສານ;
4. ສະເໜີ ປ່ຽນແປງ, ໂຈະ ຫຼື ລົບລ້າງ ການປະຕິບັດທີ່ບໍ່ຖືກຕ້ອງ ຕາມຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ຫຼື ຄຳພິພາກສາຂອງສານ;
5. ຄົ້ນຄວ້າ, ພິຈາລະນາ ຄຳສະເໜີ ຂອງອົງການປະຕິບັດຄຳຕັດສິນຂອງສານ ກ່ຽວກັບ ການຍົກເລີກ ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ, ຄຳພິພາກສາ ຂອງສານ;
6. ຄົ້ນຄວ້າ, ພິຈາລະນາ ກ່ຽວກັບການບໍ່ປະຕິບັດຄຳຕົກລົງຂອງສານ ເພື່ອສັ່ງຟ້ອງ ແລະ ຖະແຫຼງຕໍ່ສານປະຊາຊົນ;
7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ຕໍ່ຄຳສະເໜີ ຂອງອົງການໄອຍະການປະຊາຊົນນັ້ນ ອົງການປະຕິບັດຄຳຕັດສິນຂອງສານ ຕ້ອງປະຕິບັດພາຍໃນເວລາ ສາມສິບວັນ ນັບແຕ່ວັນໄດ້ຮັບຄຳສະເໜີ ເປັນຕົ້ນໄປ.

## ໝວດທີ 4
## ການຕິດຕາມກວດກາການປະຕິບັດກົດໝາຍ ໃນສະຖານທີ່ກັກຕົວ, ສະຖານທີ່ກັກຂັງ, ຄ້າຍດັດສ້າງ, ຄ້າຍຄຸມຂັງ ແລະ ສະຖານທີ່ປະຕິບັດມາດຕະການບັງຄັບອື່ນຂອງສານ

**ມາດຕາ 61 (ປັບປຸງ) ການຕິດຕາມກວດກາການປະຕິບັດກົດໝາຍໃນສະຖານທີ່ກັກຕົວ, ສະຖານທີ່ກັກຂັງ, ຄ້າຍດັດສ້າງ, ຄ້າຍຄຸມຂັງ ແລະ ສະຖານທີ່ປະຕິບັດມາດຕະການບັງຄັບອື່ນຂອງສານ**

ການຕິດຕາມກວດກາການປະຕິບັດກົດໝາຍ ໃນສະຖານທີ່ກັກຕົວ, ສະຖານທີ່ກັກຂັງ, ຄ້າຍດັດສ້າງ, ຄ້າຍຄຸມຂັງ ແລະ ສະຖານທີ່ປະຕິບັດມາດຕະການບັງຄັບອື່ນຂອງສານ ເພື່ອໃຫ້ປະຕິບັດຖືກຕ້ອງຕາມກົດໝາຍ, ລະບຽບການ ແລະ ເງື່ອນໄຂຂອງການກັກຕົວ, ການກັກຂັງ, ການດັດສ້າງ, ການປະຕິບັດໂທດຕັດອິດສະລະພາບ ແລະ ມາດຕະການບັງຄັບອື່ນຂອງສານ.

**ມາດຕາ 62 (ປັບປຸງ) ສິດ ແລະ ໜ້າທີ່ ຂອງອົງການໄອຍະການປະຊາຊົນ ໃນການຕິດຕາມກວດກາການປະຕິບັດກົດໝາຍ ໃນສະຖານທີ່ກັກຕົວ, ສະຖານທີ່ກັກຂັງ, ຄ້າຍດັດສ້າງ, ຄ້າຍຄຸມຂັງ ແລະ ສະຖານທີ່ປະຕິບັດມາດຕະການບັງຄັບອື່ນຂອງສານ**

ໃນການຕິດຕາມກວດກາການປະຕິບັດກົດໝາຍ ໃນສະຖານທີ່ກັກຕົວ, ສະຖານທີ່ກັກຂັງ, ຄ້າຍດັດສ້າງ, ຄ້າຍຄຸມຂັງ ແລະ ສະຖານທີ່ປະຕິບັດມາດຕະການບັງຄັບອື່ນຂອງສານນັ້ນ ອົງການໄອຍະການປະຊາຊົນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຊອກຮູ້ການກັກຕົວ, ການກັກຂັງ, ການຍົກຍ້າຍ, ການອອກປິ່ນປົວ ແລະ ການປ່ອຍຕົວ ຜູ້ຖືກສົງໄສ, ຜູ້ຖືກຫາ, ຈຳເລີຍ, ຜູ້ຖືກດັດສ້າງ ຫຼື ນັກໂທດ ປະຕິບັດຢ່າງຖືກຕ້ອງ ຫຼື ບໍ່ຖືກຕ້ອງ ຕາມກົດໝາຍໄດ້ກຳນົດໄວ້ ເພື່ອວາງມາດຕະການແກ້ໄຂໃຫ້ທັນການ;

2. ລົງກວດກາ ສະຖານທີ່ກັກຕົວ, ສະຖານທີ່ກັກຂັງ, ຄ້າຍດັດສ້າງ, ຄ້າຍຄຸມຂັງ ແລະ ສະຖານທີ່ປະຕິບັດມາດຕະການບັງຄັບອື່ນຂອງສານ ຢ່າງເປັນລະບົບ ຫຼື ໃນເວລາໃດກໍໄດ້ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ;

3. ກວດກາເອກະສານ ກ່ຽວກັບການກັກຕົວ, ການຈັບຕົວ, ການກັກຂັງ, ການປ່ອຍຕົວ, ການດັດສ້າງ ແລະ ການປະຕິບັດມາດຕະການບັງຄັບອື່ນຂອງສານ;

4. ກວດກາການຄຸ້ມຄອງ ຜູ້ຖືກ ກັກຕົວ, ກັກຂັງ, ດັດສ້າງ ແລະ ປະຕິບັດມາດຕະການບັງຄັບອື່ນຂອງສານ ພ້ອມທັງສອບຖາມບຸກຄົນດັ່ງກ່າວ;

5. ກວດກາພຶດຕິກຳຂອງເຈົ້າໜ້າທີ່ຕໍ່ບຸກຄົນທີ່ຖືກ ກັກຕົວ, ຈັບຕົວ, ກັກຂັງ, ດັດສ້າງ ແລະ ປະຕິບັດມາດຕະການບັງຄັບອື່ນຂອງສານ. ໃນກໍລະນີ ພົບເຫັນພຶດຕິກຳຂອງເຈົ້າໜ້າທີ່ ເປັນການລະເມີດກົດໝາຍ ແລະ ລະບຽບການ ຕ້ອງຕັກເຕືອນ. ຖ້າພຶດຕິກຳ ຫາກເປັນການກະທຳຜິດທາງອາຍາ ກໍຕ້ອງດຳເນີນຄະດີຕາມກົດໝາຍ;

6. ສັ່ງໃຫ້ປ່ອຍຕົວໃນທັນໃດ ບຸກຄົນທີ່ຖືກ ກັກຕົວ, ຈັບຕົວ, ກັກຂັງ, ດັດສ້າງ ຫຼື ຖືກປະຕິບັດມາດຕະການບັງຄັບອື່ນຂອງສານ ທີ່ບໍ່ຖືກຕ້ອງຕາມກົດໝາຍ;

7. ເຂົ້າຮ່ວມ, ຄົ້ນຄວ້າ, ພິຈາລະນາ, ຄັດເລືອກ, ຈັດແບ່ງປະເພດ ແລະ ເຮັດບັນຊີນັກໂທດ ທີ່ມີເງື່ອນໄຂໄດ້ຮັບການອະໄພຍະໂທດ ແລະ ກວດກາການຈັດຕັ້ງປະຕິບັດການໃຫ້ອະໄພຍະໂທດ ຕາມລັດຖະດຳລັດຂອງປະທານປະເທດ;

8. ກວດບັນຊີລາຍຊື່ ຜູ້ຖືກຫາ, ຈຳເລີຍ, ຜູ້ຖືກດັດສ້າງ ຫຼື ນັກໂທດ ໃນສະຖານທີ່ກັກຕົວ, ສະຖານທີ່ກັກຂັງ, ຄ້າຍດັດສ້າງ, ຄ້າຍຄຸມຂັງ, ຜູ້ມີເງື່ອນໄຂປ່ອຍຕົວກ່ອນກຳນົດ, ຜູ້ໄດ້ຮັບອະນຸຍາດໃຫ້ອອກໄປປິ່ນປົວ ຫຼື ນັກໂທດ ທີ່ໄດ້ຮັບອະນຸຍາດໃຫ້ຍົກຍ້າຍຈາກບ່ອນໜຶ່ງ ໄປປະຕິບັດໂທດ ຢູ່ບ່ອນອື່ນ;

9. ກວດກາຄຳສັ່ງ ແລະ ລະບຽບການຕ່າງໆ ຂອງຫົວໜ້າຮັບຜິດຊອບສະຖານທີ່ກັກຕົວ, ກັກຂັງ, ຄ້າຍດັດສ້າງ ແລະ ຄ້າຍຄຸມຂັງ ເພື່ອໃຫ້ສອດຄ່ອງກັບກົດໝາຍ ແລະ ໃຫ້ຫົວໜ້າຮັບຜິດຊອບສະຖານທີ່ດັ່ງກ່າວ ອະທິບາຍເຫດຜົນຂອງການລະເມີດກົດໝາຍ.

ຫົວໜ້າຮັບຜິດຊອບສະຖານທີ່ກັກຕົວ, ສະຖານທີ່ກັກຂັງ, ຄ້າຍດັດສ້າງ ແລະ ຄ້າຍຄຸມຂັງ ຕ້ອງປະຕິບັດຕາມຄຳສັ່ງ ຂອງຫົວໜ້າອົງການໄອຍະການປະຊາຊົນ ກ່ຽວກັບການເຄົາລົບລະບຽບການ ການກັກຕົວ, ການກັກຂັງ, ການດັດສ້າງ ແລະ ການຄຸມຂັງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 63 ຄວາມຮັບຜິດຊອບໃນການສົ່ງຄຳຮ້ອງຟ້ອງ, ຄຳສະເໜີ ຂອງຜູ້ຖືກຫາ, ຈຳເລີຍ, ຜູ້ຖືກດັດສ້າງ ແລະ ນັກໂທດ**

ຄະນະຮັບຜິດຊອບ ສະຖານທີ່ກັກຂັງ, ຄ້າຍດັດສ້າງ ແລະ ຄ້າຍຄຸມຂັງ ຕ້ອງສົ່ງຄຳຮ້ອງຟ້ອງ, ຄຳສະເໜີຂອງຜູ້ຖືກຫາ, ຈຳເລີຍ, ຜູ້ຖືກດັດສ້າງ ແລະ ນັກໂທດ ໃຫ້ອົງການໄອຍະການປະຊາຊົນ ພາຍໃນເວລາ ສີ່ສິບແປດຊົ່ວໂມງ ນັບແຕ່ເວລາໄດ້ຮັບ ເປັນຕົ້ນໄປ.

## ພາກທີ VII
## ລະບອບ ແລະ ວິທີ ເຮັດວຽກ

**ມາດຕາ 64 ລະບອບເຮັດວຽກ**

ອົງການໄອຍະການປະຊາຊົນທຸກຂັ້ນ ປະກອບເປັນລະບົບອົງການໄອຍະການປະຊາຊົນ ເອກະພາບ ແລະລວມສູນ, ນຳພາໂດຍຫົວໜ້າອົງການໄອຍະການປະຊາຊົນສູງສຸດ, ຫົວໜ້າອົງການໄອຍະການປະຊາຊົນຂັ້ນລຸ່ມຂຶ້ນກັບຫົວໜ້າອົງການໄອຍະການປະຊາຊົນຂັ້ນເທິງ. ໃນເວລາປະຕິບັດໜ້າທີ່ຂອງຕົນນັ້ນ ຫົວໜ້າອົງການໄອຍະການປະຊາຊົນຂັ້ນລຸ່ມ ປະຕິບັດຕາມກົດໝາຍ ແລະ ຄຳສັ່ງ ຂອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ.

ອົງການໄອຍະການປະຊາຊົນ ປະຕິບັດໜ້າທີ່ ບົນພື້ນຖານຫຼັກການນິຕິທຳ ໂດຍສອດຄ່ອງກັບກົດໝາຍ, ຮັບປະກັນການປະຕິບັດກົດໝາຍ ໃຫ້ຖືກຕ້ອງ ແລະ ເປັນເອກະພາບ.

**ມາດຕາ 65 ວິທີເຮັດວຽກ**

ອົງການໄອຍະການປະຊາຊົນ ປະຕິບັດໜ້າທີ່ ໂດຍມີແຜນການ, ແບ່ງງານ ແລະ ແບ່ງຄວາມຮັບຜິດຊອບໃຫ້ບຸກຄົນ, ມີການກວດກາ, ສະຫຼຸບ, ຖອດຖອນບົດຮຽນ ແລະ ລາຍງານ, ຂໍຄຳເຫັນຊີ້ນຳຈາກຂັ້ນເທິງຂອງຕົນ, ປະສານສົມທົບກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ.

## ພາກທີ VIII
## ຂໍ້ຫ້າມ

**ມາດຕາ 66 ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງອື່ນ ມີພຶດຕິກຳ ດັ່ງນີ້:

1. ແຊກແຊງ, ກ້າວກ່າຍ ແລະ ຂັດຂວາງ ການປະຕິບັດໜ້າທີ່ ຂອງພະນັກງານ-ລັດຖະກອນ ອົງການໄອຍະການປະຊາຊົນ;

2. ປົກປິດ, ເຊື່ອງອຳ ຫຼື ທຳລາຍ ຂໍ້ມູນ, ຫຼັກຖານ ກ່ຽວກັບຄະດີ;

3. ນາບຂູ່ ຫຼື ທຳຮ້າຍ ພະນັກງານ-ລັດຖະກອນອົງການໄອຍະການປະຊາຊົນ, ພະຍານ ຫຼື ບຸກຄົນອື່ນທີ່ກ່ຽວຂ້ອງກັບຄະດີ;

4. ປົກປ້ອງ, ຊຸກເຊື່ອງ ຜູ້ຖືກສົງໄສ, ຜູ້ຖືກຫາ, ຈຳເລີຍ, ນັກໂທດ ຫຼື ຄູ່ຄວາມໃນຄະດີ;

5. ໃຫ້ສິນບົນ ພະນັກງານ-ລັດຖະກອນ ອົງການໄອຍະການປະຊາຊົນ;

6. ໝິ່ນປະໝາດ,ໃສ່ຮ້າຍ ພະນັກງານ-ລັດຖະກອນ ອົງການໄອຍະການປະຊາຊົນ;

7. ກັກຕົວ, ຈັບຕົວ, ກັກຂັງ, ກວດຄົ້ນເຄຫະສະຖານ ໂດຍບໍ່ມີຄຳສັ່ງ ຂອງອົງການໄອຍະການປະຊາຊົນ ຫຼື ສານປະຊາຊົນ;

8. ນຳໃຊ້, ເຮັດໃຫ້ ຂອງກາງໃນຄະດີ ເປ່ເພ ເສຍຫາຍ;

9. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 67 (ປັບປຸງ) ຂໍ້ຫ້າມສຳລັບພະນັກງານ-ລັດຖະກອນ ອົງການໄອຍະການປະຊາຊົນ**

ຫ້າມ ພະນັກງານ-ລັດຖະກອນ ອົງການໄອຍະການປະຊາຊົນ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ຕຳແໜ່ງ, ໜ້າທີ່, ສິດອຳນາດ ເພື່ອຫາຜົນປະໂຫຍດແກ່ ຕົນ, ໝູ່ຄູ່, ພັກພວກ, ຄອບຄົວ ຫຼື ຍາດພີ່ນ້ອງຂອງຕົນ;

2. ນຳໃຊ້ສິດ, ປະຕິບັດໜ້າທີ່ ເກີນຂອບເຂດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ;

3. ບັງຄັບ ແລະ ນາບຂູ່ ຜູ້ຖືກຫາ, ຈຳເລີຍ, ນັກໂທດ ຫຼື ຄູ່ຄວາມໃນຄະດີ;

4. ເມີນເສີຍຕໍ່ໜ້າທີ່, ບິດເບືອນຄວາມຈິງ, ປິດບັງ ຫຼື ປົກປ້ອງ ຜູ້ຖືກຫາ, ຈຳເລີຍ, ນັກໂທດ ຫຼື ຄູ່ຄວາມໃນຄະດີ;

5. ກັກສຳນວນຄະດີ, ກົດໜ່ວງ ຖ່ວງດຶງ ເອກະສານ ເພື່ອຫາຜົນປະໂຫຍດຈາກການດຳເນີນຄະດີ;

6. ທວງ, ຮຽກ, ຮັບ, ເອົາສິນບົນ ຈາກຄູ່ຄວາມ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ;

7. ພົວພັນກັບ ຜູ້ຖືກຫາ, ຈຳເລີຍ, ນັກໂທດ ຫຼື ຄູ່ຄວາມໃນຄະດີ ເພື່ອຫາຜົນປະໂຫຍດ;

8. ປິດບັງ, ຊຸກເຊື່ອງ ເອກະສານ, ຫຼັກຖານ ທີ່ມີຢູ່ໃນສຳນວນຄະດີ, ນຳໃຊ້, ເຮັດໃຫ້ ຂອງກາງໃນຄະດີເປ່ເພ ເສຍຫາຍ;

9. ເປີດເຜີຍຄວາມລັບທາງລັດຖະການ;

10. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 68 ຂໍ້ຫ້າມສໍາລັບຜູ້ເຂົ້າຮ່ວມໃນການດໍາເນີນຄະດີ**

ຫ້າມ ຜູ້ເຂົ້າຮ່ວມໃນການດໍາເນີນຄະດີ ມີພຶດຕິກໍາ ດັ່ງນີ້:

1. ຂັດຂວາງ, ສ້າງຄວາມຫຍຸ້ງຍາກ, ນາບຂູ່ ພະນັກງານ-ລັດຖະກອນອົງການໄອຍະການປະຊາຊົນ, ຜູ້ສະໜອງຂໍ້ມູນ, ຫຼັກຖານ ໃຫ້ແກ່ການດໍາເນີນຄະດີ ຫຼື ບຸກຄົນອື່ນທີ່ກ່ຽວຂ້ອງ;

2. ລາຍງານ, ສະໜອງຂໍ້ມູນ, ຫຼັກຖານ ບໍ່ຖືກກັບຄວາມຈິງ, ຊຸກເຊື່ອງ, ທໍາລາຍເອກະສານ, ວັດຖຸ ສິ່ງຂອງ ທີ່ເປັນຫຼັກຖານໃນຄະດີ;

3. ປະຕິເສດການສະໜອງຂໍ້ມູນ, ຫຼັກຖານ ກ່ຽວກັບຄະດີ;

4. ໃຫ້ສິນບົນ ພະນັກງານ-ລັດຖະກອນອົງການໄອຍະການປະຊາຊົນ, ພະຍານ ຫຼື ບຸກຄົນອື່ນ ທີ່ກ່ຽວຂ້ອງ;

5. ໝິ່ນປະໝາດ, ໃສ່ຮ້າຍ ພະນັກງານ-ລັດຖະກອນອົງການໄອຍະການປະຊາຊົນ;

6. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ.

## ພາກທີ IX

## ການຕິດຕາມກວດກາອົງການໄອຍະການປະຊາຊົນ

**ມາດຕາ 69 (ປັບປຸງ) ປະເພດການຕິດຕາມກວດກາ**

ການຕິດຕາມກວດກາອົງການໄອຍະການປະຊາຊົນ ມີ ສອງປະເພດ ດັ່ງນີ້:

1. ການຕິດຕາມກວດກາພາຍໃນ ຊຶ່ງແມ່ນ ອົງການໄອຍະການປະຊາຊົນຂັ້ນເທິງ ເປັນຜູ້ຕິດຕາມ ກວດກາ ອົງການໄອຍະການປະຊາຊົນຂັ້ນລຸ່ມ ຕາມກົດໝາຍ;

2. ການຕິດຕາມກວດກາພາຍນອກ ຊຶ່ງແມ່ນ ສະພາແຫ່ງຊາດ ແລະ ສະພາປະຊາຊົນທ້ອງຖິ່ນ ເປັນຜູ້ ຕິດຕາມກວດກາ ຕາມກົດໝາຍ.

**ມາດຕາ 70 (ປັບປຸງ) ເນື້ອໃນການຕິດຕາມກວດກາ**

ການຕິດຕາມກວດກາອົງການໄອຍະການປະຊາຊົນ ມີເນື້ອໃນ ດັ່ງນີ້:

1. ການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ຂອງອົງການໄອຍະການປະຊາຊົນ;

2. ການປະຕິບັດກົດໝາຍ ຂອງອົງການໄອຍະການປະຊາຊົນ ເປັນຕົ້ນ ການນໍາໃຊ້ວິທີການສືບສວນ-ສອບສວນ ແລະ ມາດຕະການສະກັດກັ້ນ;

3. ການຄຸ້ມຄອງ ທາງດ້ານການຈັດຕັ້ງ ແລະ ບຸກຄະລາກອນ;

4. ການປະຕິບັດນະໂຍບາຍ ແລະ ມາດຕະການ ຕໍ່ພະນັກງານ-ລັດຖະກອນ ອົງການໄອຍະການປະຊາຊົນ;

5. ເນື້ອໃນອື່ນ ທີ່ເຫັນວ່າ ມີຄວາມຈໍາເປັນ.

**ມາດຕາ 71 (ປັບປຸງ) ຮູບການການຕິດຕາມກວດກາ**

ການຕິດຕາມກວດກາອົງການໄອຍະການປະຊາຊົນ ມີ ສາມຮູບການ ດັ່ງນີ້:

1. ການຕິດຕາມການກວດກາຕາມແຜນການປົກກະຕິ ຊຶ່ງແມ່ນ ການກວດກາທີ່ດໍາເນີນຕາມແຜນການ ຢ່າງເປັນປະຈໍາ ແລະ ມີກໍານົດເວລາທີ່ແນ່ນອນ;

2. ການຕິດຕາມການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນ ການກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ຊຶ່ງຕ້ອງແຈ້ງໃຫ້ຜູ້ຖືກກວດກາ ຮູ້ກ່ອນລ່ວງໜ້າ;

3. ການຕິດຕາມການກວດກາແບບກະທັນຫັນ ຊຶ່ງແມ່ນ ການກວດກາຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຮູ້ກ່ອນລ່ວງໜ້າ.

ໃນການດຳເນີນການຕິດຕາມກວດການັ້ນ ຕ້ອງປະຕິບັດໃຫ້ຖືກຕ້ອງຕາມກົດໝາຍ.

## ພາກທີ X
## ວັນສ້າງຕັ້ງ, ຕາປະທັບ, ກາໝາຍ, ເຄື່ອງໝາຍ, ເຄື່ອງແບບ, ບັດປະຈຳການ, ບັດພະນັກງານໄອຍະການ ແລະ ງົບປະມານ ຂອງອົງການໄອຍະການປະຊາຊົນ

**ມາດຕາ 72 ວັນສ້າງຕັ້ງອົງການໄອຍະການປະຊາຊົນ**

ວັນສ້າງຕັ້ງອົງການໄອຍະການປະຊາຊົນ ແມ່ນ ວັນທີ 9 ມັງກອນ 1990.

**ມາດຕາ 73 (ປັບປຸງ) ຕາປະທັບ ຂອງອົງການໄອຍະການປະຊາຊົນ**

ອົງການໄອຍະການປະຊາຊົນແຕ່ລະຂັ້ນ ມີຕາປະທັບຂອງຕົນ ຊຶ່ງເປັນຮູບວົງມົນ, ຢູ່ກາງວົງມົນ ມີເຄື່ອງໝາຍຊາດ, ເນື້ອໃນຢູ່ໃນຂອບວົງມົນເບື້ອງເທິງ ຂຽນວ່າ "ອົງການໄອຍະການປະຊາຊົນ ຂັ້ນຂອງຕົນ" ເບື້ອງລຸ່ມຂຽນວ່າ "ຫົວໜ້າ" ຊຶ່ງຂັ້ນດ້ວຍຮູບດາວຫ້າແຈ.

ຕາປະທັບ ຂອງອົງການໄອຍະການປະຊາຊົນສູງສຸດ ເນື້ອໃນຢູ່ໃນຂອບວົງມົນເບື້ອງເທິງ ຂຽນວ່າ "ອົງການໄອຍະການປະຊາຊົນສູງສຸດ" ເບື້ອງລຸ່ມຂຽນວ່າ "ຫົວໜ້າ" ຊຶ່ງຂັ້ນດ້ວຍຮູບດາວຫ້າແຈ.

**ມາດຕາ 74 (ປັບປຸງ) ກາໝາຍ, ເຄື່ອງໝາຍ, ເຄື່ອງແບບ ແລະ ບັດປະຈຳການ ພະນັກງານ-ລັດຖະກອນ ອົງການໄອຍະການປະຊາຊົນ**

ກາໝາຍ, ເຄື່ອງໝາຍ ແລະ ເຄື່ອງແບບ ພະນັກງານ-ລັດຖະກອນ ອົງການໄອຍະການປະຊາຊົນ ແມ່ນຄະນະປະຈຳສະພາແຫ່ງຊາດ ເປັນຜູ້ກຳນົດ ຕາມການສະເໜີຂອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ.

ສຳລັບກາໝາຍ ພະນັກງານໄອຍະການປະຊາຊົນນັ້ນ ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ເປັນຜູ້ອອກໃຫ້ ແລະ ຄຸ້ມຄອງການນຳໃຊ້.

ບັດປະຈຳການ ພະນັກງານ-ລັດຖະກອນ ອົງການໄອຍະການປະຊາຊົນ ແມ່ນ ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ເປັນຜູ້ອອກໃຫ້.

**ມາດຕາ 75 (ໃໝ່) ບັດພະນັກງານໄອຍະການປະຊາຊົນ**

ບັດພະນັກງານໄອຍະການປະຊາຊົນ ແມ່ນ ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ເປັນຜູ້ອອກໃຫ້ ແລະ ຄຸ້ມຄອງການນຳໃຊ້ ຕາມລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 76 ງົບປະມານຂອງອົງການໄອຍະການປະຊາຊົນ**

ງົບປະມານຂອງອົງການໄອຍະການປະຊາຊົນ ໃຫ້ຂຶ້ນຕາມສາຍຕັ້ງ ໂດຍແມ່ນອົງການໄອຍະການປະຊາຊົນສູງສຸດ ເປັນຜູ້ສັງລວມແຜນງົບປະມານ ຈາກອົງການໄອຍະການປະຊາຊົນ ຂັ້ນລຸ່ມຂອງຕົນ ແລ້ວສ້າງເປັນແຜນງົບປະມານລວມ ແລະ ນຳສະເໜີຂໍການອະນຸມັດ ຕາມກົດໝາຍ.

ງົບປະມານຂອງອົງການໄອຍະການທະຫານ ໃຫ້ຂຶ້ນກັບກະຊວງປ້ອງກັນປະເທດ.

ຫົວໜ້າ, ຮອງຫົວໜ້າອົງການໄອຍະການປະຊາຊົນ, ພະນັກງານໄອຍະການປະຊາຊົນ ແລະ ຜູ້ຊ່ວຍພະນັກງານໄອຍະການປະຊາຊົນ ມີ ດັດສະນີ ຊັ້ນ ຂັ້ນ ເງິນເດືອນ ແລະ ນະໂຍບາຍອຸດໜູນສະເພາະ ຊຶ່ງໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ພາກທີ XI
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 77 (ປັບປຸງ) ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການປະຕິບັດກົດໝາຍສະບັບນີ້ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນ ຕາມລະບຽບການ.

### ມາດຕາ 78 (ປັບປຸງ) ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ຊຶ່ງສ້າງຄວາມເສຍຫາຍໃຫ້ແກ່ ຜົນປະໂຫຍດຂອງ ລັດ, ສັງຄົມ ແລະ ລວມໝູ່, ສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ ຈະຖືກ ສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ທີ່ຕົນໄດ້ກໍ່ຂຶ້ນ ຫຼື ຖືກລົງໂທດທາງອາຍາຕາມກົດໝາຍ.

## ພາກທີ XII
## ບົດບັນຍັດສຸດທ້າຍ

### ມາດຕາ 79 ການຈັດຕັ້ງປະຕິບັດ

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ອົງການໄອຍະການປະຊາຊົນສູງສຸດ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

### ມາດຕາ 80 (ປັບປຸງ) ຜົນສັກສິດ

ກົດໝາຍສະບັບນີ້ ມີຜົນສັກສິດນັບແຕ່ວັນທີ 30 ມັງກອນ 2025 ພາຍຫຼັງ ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ ເປັນຕົ້ນໄປ.

ກົດໝາຍສະບັບນີ້ ປ່ຽນແທນກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ ສະບັບເລກທີ 21/ສພຊ, ລົງວັນທີ 10 ພຶດສະພາ 2017.

ປະທານສະພາແຫ່ງຊາດ

ປອ ໄຊສົມພອນ ພົມວິຫານ